# ລາຍການທີ່ຕ້ອງກວດເບິ່ງທັກສະຂອງຜູ້ຊ່ວຍເຫຼືອດູແລຢູ່ໃນບ້ານ

ລາຍການທີ່ຕ້ອງກວດຕໍ່ໄປນີ້ປະກອບມີມາດຖານທີ່ຜູ້ໃຫ້ຄະແນນນໍາໃຊ້ເພື່ອ ປະເມີນຜົນງານຂອງຜູ້ສະໝັກເຂົ້າສອບແຕ່ລະຄົນສໍາລັບທັກສະແຕ່ລະອັນທີ່ ລວມຢູ່ໃນບົດສອບເສັງທັກສະ. ລາຍການທີ່ຕ້ອງກວດແຕ່ລະອັນເລີ່ມຕົ້ນດ້ວຍ ລາຍລະອຽດວ່າຈະກໍານົດທັກສະແນວໃດເພື່ອຈໍາລອງສະຖານະການຂອງຄົນ ເຈັບ ເພື່ອຈຸດປະສົງຂອງການທົດສອບ. ບໍ່ມີຄວາມຈໍາເປັນຕ້ອງເຮັດລາຍການ ມາດຖານລົງເປັນລໍາດັບທີ່ຜູ້ສະໝັກເຂົ້າສອບຈະຕ້ອງປະຕິບັດທັກສະ.

ລາຍການທີ່ຕ້ອງກວດບໍ່ແມ່ນຂັ້ນຕອນດໍາເນີນການ ແລະບໍ່ຄວນນໍາໃຊ້ເພື່ອ ຮຽນຮູ້ທັກສະຕ່າງໆ. ຂັ້ນຕອນດໍາເນີນການສໍາລັບທັກສະເຫຼົ່ານີ້ແມ່ນໄດ້ສອນ ໃຫ້ແລ້ວຜ່ານໂຄງການຝຶກອົບຮົມຕ່າງໆ ແລະສາມາດເບິ່ງໄດ້ຢູ່ໃນປຶ້ມຕໍາລາ ຕ່າງໆ (ຕົວຢ່າງ, ຫຼັກການພື້ນຖານຂອງການດູແລສະບັບປັບປຸງ (Revised Fundamentals of Care)), ແລະເອກະ ສານການຮຽນຮູ້ອື່ນໆ. ເຖິງແນວໃດກໍ່ຕາມ, ລາຍການທີ່ຕ້ອງກວດອາດຈະມີ ປະໂຫຍດສໍາລັບຜູ້ສະໝັກເຂົ້າສອບ ແລະຜູ້ສອນໃນການປະເມີນຜົນການຮຽນ ໃນຫ້ອງຮຽນ.

ເມື່ອດໍາເນີນການທົດສອບ, ຜູ້ປະເມີນຈະເບິ່ງຜູ້ສະໝັກເຂົ້າສອບປະຕິບັດທັກ ສະ ແລະປຽບທຽບກັບຜົນງານຂອງຜູ້ສະໝັກເຂົ້າສອບແຕ່ລະຄົນໃສ່ກັບຈຸດທີ່ ຕ້ອງກວດ ທີ່ປະກອບເຂົ້າເປັນທັກສະ. ຈຸດກວດແຕ່ລະອັນມີຄ່າທີ່ຕ່າງກັນ ອີງ ຕາມຄວາມສໍາຄັນທີ່ມັນມີຫຼາຍປານໃດຕໍ່ກັບການປະຕິບັດທັກສະທີ່ປອດໄພ.
**ຈຸດກວດແຕ່ລະອັນໄດ້ຮັບການກໍານົດໃຫ້ມີຄ່າຂອງຈຸດ ອີງຕາມຄວາມສໍາຄັນທີ່ມັນ ມີຫຼາຍປານໃດຕໍ່ກັບການປະຕິບັດທັກສະທີ່ປອດໄພ. ພວກເຮົາໄດ້ເຮັດຈຸດກວດໃຫ້ ເປັນຕົວໜັງສືເຂັ້ມດ້ວຍຄ່າຈຸດສູງສຸດ.**

ກົມສາທາລະນະສຸກຂອງລັດວໍຊິງຕັນໄດ້ກໍານົດວ່າຈະຕ້ອງໄດ້ຮັບລັກຄະແນນ ເພື່ອຜ່ານທັກສະນັ້ນ. ການຕັດສິນໃຈຂອງເຂົາເຈົ້າແມ່ນອີງຕາມການໃຫ້ການ ປົກປ້ອງທົ່ວໄປຂອງສັງຄົມ.

ຜູ້ສະໝັກເຂົ້າສອບຈໍາເປັນຕ້ອງຜ່ານທັກສະທັງໝົດຫ້າຢ່າງ ເພື່ອຜ່ານການທົດ ສອບ, ແຕ່ຜົນງານທີ່ເຮັດໄດ້ສົມບູນແບບທີ່ສຸດ ແມ່ນບໍ່ຈໍາເປັນ ເພື່ອໃຫ້ຜ່ານທັກ ສະ. ຄ່າທີ່ໄດ້ກໍານົດໃຫ້ກັບແຕ່ລະຈຸດກວດແມ່ນ ແລະຈະຕ້ອງການຈັກຄະແນນ ເພື່ອໃຫ້ຜ່ານທັກສະແມ່ນຂໍ້ມູນການທົດສອບທີ່ມີຄວາມຮັບປະກັນ. ແມ້ແຕ່ຜູ້ ປະເມີນ ຜູ້ທີ່ສັງເກດ ແລະບັນທຶກຜົນງານຂອງທ່ານກໍ່ຍັງບໍ່ຮູ້ຈັກຄ່າຂອງຈຸດ ກວດແຕ່ລະອັນ ຫຼືຈະມີຈັກຄະແນນທີ່ຈະຜ່ານທັກສະ. ຜູ້ປະເມີນຈະປ້ອນການສັງເກດການເລື່ອງຜົນງານຂອງຜູ້ສະໝັກເຂົ້າສອບເຂົ້າຄອມພິວເຕີ, ແລະຄອມ ພິວເຕີຈະໃຫ້ຄະແນນການສອບເສັງ.

**ບັນທຶກເລື່ອງການລ້າງມື:** ເຕັກນິກການລ້າງມືຂອງທ່ານໄດ້ຮັບການປະເມີນຢູ່ໃນຕອນເລີ່ມຕົ້ນຂອງການທົດສອບ. ທັກສະນີ້ຈະບໍ່ຖືກເຕືອນຂຶ້ນມາທັນທີ, ເຊິ່ງໝາຍຄວາມວ່າ ຈະບໍ່ມີ ການບອກໃຫ້ທ່ານລ້າງມື. ຜູ້ຊ່ວຍດູແລຢູ່ໃນບ້ານໄດ້ຮັບການຄາດຫວັງໃຫ້ຮູ້ວ່າ ຕ້ອງລ້າງມືຂອງຕົນເອງກ່ອນ ແລະຫຼັງຈາກສໍາຜັດ (ຈັບຕ້ອງ) ກັບຄົນເຈັບ. ການສາທິດເມື່ອມີຄວາມຈໍາເປັນຕ້ອງໄດ້ລ້າງມືແມ່ນໄດ້ຮັບການປະເມີນເປັນສ່ວນໜຶ່ງຂອງການປະຕິບັດການດູແລທົ່ວໄປ.

**ການປະຕິບັດການດູແລທົ່ວໄປ.** ແມ່ນການປະຕິບັດທີ່ເປັນສ່ວນໜຶ່ງຂອງທຸກໆທັກສະເຊັ່ນ: ສິດຂອງຄົນເຈັບ, ການສື່ສານກັບຄົນເຈັບ, ຄວາມປອດໄພ ແລະຄວາມສະບາຍຂອງຄົນເຈັບ, ແລະການຄວບຄຸມການຕິດເຊື້ອ. ການປະຕິບັດການດູແລທົ່ວໄປໄດ້ຮັບການ ໃຫ້ຄະແນນໃນລະຫວ່າງການປະຕິບັດທັກສະແຕ່ລະອັນຂອງທ່ານ. ທ່ານຈະໄດ້ ຮັບຄະແນນສໍາລັບການປະຕິບັດການດູແລທົ່ວໄປແຍກຕ່າງຫາກ.

| ການລ້າງມື | |
|---|---|
| ເມື່ອການທົດສອບທັກສະຕ່າງໆເລີ່ມຕົ້ນຂຶ້ນ, ຜູ້ສະໝັກເຂົ້າສອບໄດ້ຮັບການປະເມີນເຕັກນິກ ການລ້າງມືຂອງລາວ/ນາງ. ຈະບໍ່ມີການບອກໃຫ້ຜູ້ສະໝັກເຂົ້າສອບລ້າງມືຂອງລາວ/ນາງ, ແຕ່ມີຄວາມຄາດຫວັງໃຫ້ຮູ້ວ່າ ກ່ອນຈະມີການສໍາຜັດທາງດ້ານຮ່າງກາຍກັບຄົນເຈັບ, ຄວນມີການລ້າງມືຂອງລາວ/ນາງກ່ອນ. | |
| ຜູ້ສະໝັກເຂົ້າສອບ: | |
| 1 | **ເອົານໍ້າລູບໃສ່ມື ແລະຂໍ້ມືຢູ່ໃນນໍ້າທີ່ໄຫຼຜ່ານ ເພື່ອເລີ່ມຕົ້ນທໍາຄວາມສະອາດບໍ?** |
| 2 | ໃຊ້ສະບູໃສ່ມື ເພື່ອເລີ່ມຕົ້ນການລ້າງບໍ? |
| 3 | ລູບສະບູໄປທົ່ວຜິວມື ແລະຂໍ້ມືບໍ? |
| 4 | **ໃຊ້ມືທີ່ມີຟອງສະບູຖູຂັດກັນເປັນເວລາຢ່າງໜ້ອຍ 20 ວິນາທີບໍ?** |
| 5 | ລ້າງມື ແລະຂໍ້ມືຢູ່ພາຍໃຕ້ນໍ້າໄຫຼ ເພື່ອໄລເອົາສະບູອອກບໍ? |
| 6 | ຊັນປາຍມືລົງລຸ່ມໃນຂະນະທີ່ກໍາລັງລ້າງ ແລະໄລເອົາສະບູອອກບໍ? |
| 7 | ໃຊ້ເຈ້ຍເຊັດມືທີ່ແຫ້ງສະອາດ ເພື່ອເຊັດມື ແລະຂໍ້ມືໃຫ້ແຫ້ງບໍ? |
| 8 | ຈໍາກັດເຊັດໃຫ້ແຫ້ງແຕ່ບ່ອນທີ່ໄດ້ລ້າງບໍ? |
| 9 | ໃຊ້ເຈ້ຍເຊັດມືຈັບເພື່ອປິດນໍ້າຫຼັງຈາກທໍາຄວາມສະອາດມືບໍ? |
| 10 | ຖິ້ມເຈ້ຍເຊັດມືທີ່ເຊັດແລ້ວລົງໃນຖັງຂີ້ເຫຍື້ອບໍ? |
| 11 | ຈັບຂັ້ນຕອນດ້ວຍມືສະອາດທີ່ຫຼີກເວັ້ນການປົນເປື້ອນບໍ (ຕົວຢ່າງ, ການສໍາຜັດກັບ ບ່ອນຄວບຄຸມກ໊ອກນໍ້າ, ບ່ອນເອົາເຈ້ຍເຊັດມື, ອ່າງລ້າງມື ຫຼືຖັງຂີ້ເຫຍື້ອໂດຍກົງ)? |

| ການປະຕິບັດການດູແລທົ່ວໄປ | |
|---|---|
| ການປະຕິບັດການດູແລທົ່ວໄປແມ່ນພຶດຕິກໍາ ຫຼືການກະທໍາທີ່ເປັນສ່ວນໜຶ່ງຂອງທຸກການດູ ແລ ທີ່ຜູ້ຊ່ວຍດູແລໃນບ້ານ (HCA) ຈັດໃຫ້ກັບຄົນເຈັບ. ໃນລະຫວ່າງການທົດສອບ, ການປະ ຕິບັດການດູ ແລທົ່ວໄປໄດ້ຮັບການປະເມີນເປັນສ່ວນໜຶ່ງຂອງທຸກໆທັກສະທີ່ຜູ້ສະໝັກເຂົ້າ ສອບປະຕິບັດ. | |
| ຜູ້ສະໝັກເຂົ້າສອບ: | |
| 1 | ແນະນໍາຕົວເອງໃຫ້ກັບຄົນເຈັບຮູ້ຈັກບໍ ເມື່ອເລີ່ມຕົ້ນການດູແລ? |
| 2 | ໃຊ້ມາດຕະການຄວບຄຸມການຕິດເຊືອ ແລະການປ້ອງກັນລ່ວງໜ້າຕາມມາດຕະ ຖານ ເພື່ອປົກປ້ອງຄົນເຈັບ ແລະ HCA ຕະຫຼອດຂັ້ນຕອນດໍາເນີນການບໍ? |
| 3 | ສ້າງໃຫ້ເກີດຄວາມຕ້ອງການທາງສັງຄົມ ແລະມະນຸດຂອງຄົນເຈັບຕະຫຼອດຂັ້ນ ຕອນດໍາເນີນການບໍ? |
| 4 | ສ້າງໃຫ້ເກີດສິດຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 5 | ສ້າງໃຫ້ເກີດຄວາມປອດໄພຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 6 | ສ້າງໃຫ້ເກີດຄວາມສະດວກສະບາຍຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 7 | ປະສົງນໍາໃຊ້ທົ່ວໄປໄວ້ພາຍໃນບ່ອນທີ່ຄົນເຈັບສາມາດໄປເອົາມາໄດ້ໃນຕອນທ້າຍຂອງ ການດູແລບໍ (ຕົວຢ່າງ, ໂທລະສັບ, ແວ່ນຕາ, ຣີໂໝດ, ເຈ້ຍອະນາໄມ, ຈອກນໍ້າ)? |

Copyright © 2013 Prometric Inc., a Delaware corporation. All Rights Reserved.

## ລາຍການທີ່ຕ້ອງກວດເບິ່ງທັກສະຂອງຜູ້ຊ່ວຍເຫຼືອດູແລຢູ່ໃນບ້ານ

| ປ້ອນອາຫານຄົນເຈັບ | |
|---|---|
| ຄົນເຈັບກຳລັງນັ່ງຢູ່ທີ່ໂຕະ ເມື່ອການດູແລເລີ່ມຕົ້ນຂຶ້ນສຳລັບທັກສະນີ້. ຄົນເຈັບບໍ່ສາມາດ ກິນອາ ຫານດ້ວຍຕົວລາວ/ນາງເອງໄດ້. ບົດບາດຂອງຄົນເຈັບແມ່ນຜູ້ສະໝັກເຂົ້າສອບຄົນ ອື່ນເປັນຄົນເຮັດ. | |
| ຜູ້ສະໝັກເຂົ້າສອບ: | |
| 1 | ແນະນຳຕົວເອງໃຫ້ກັບຄົນເຈັບຮູ້ຈັກບໍ ເມື່ອເລີ່ມຕົ້ນການດູແລ? |
| 2 | **ເຮັດໃຫ້ມີຄວາມແນ່ໃຈວ່າ ຄົນເຈັບນັ່ງຊື່ຕົງຢູ່ໃນຕັ່ງອີ້ແລ້ວບໍ ກ່ອນເລີ່ມປ້ອນອາຫານ?** |
| 3 | ນັ່ງລົງບໍ ເພື່ອປ້ອນອາຫານຄົນເຈັບ? |
| 4 | ເອົາຂອງແຫຼວໃຫ້ຄົນເຈັບດື່ມໃນເວລາທີ່ປ້ອນອາຫານບໍ? |
| 5 | ລົມກັບຄົນເຈັບໃນເວລາປ້ອນອາຫານບໍ? |
| 6 | ລໍຖ້າບໍ ເພື່ອຈະໃຫ້ກັດຄຳອາຫານອັນອື່ນ ຫຼືເອົາຂອງແຫຼວໃຫ້ດື່ມຈົນກວາຄົນເຈັບກືນອາ ຫານ ຫຼືປາກຂອງຄົນເຈັບບໍ່ມີຫຍັງແລ້ວ? |
| 7 | ຈັດປ່ຽນປະເພດຂອງອາຫານທີໃຫ້ກັດ ຫຼືຖາມຄວາມມັກຂອງຄົນເຈັບສຳລັບການກັດ ຄຳແຕ່ລະຄັ້ງບໍ? |
| 8 | ຈຳກັດປະລິມານອາຫານທີຢູ່ໃນຊ້ອນ ຫຼືບ່ວງທີຈະໃຫ້ຕາມຂະໜາດທີກັດຄຳບໍ? |
| 9 | ປະໃຫ້ຄົນເຈັບມີບໍລິເວນຂອງປາກທີ່ສະອາດໃນຕອນທ້າຍຂອງທັກສະບໍ? |
| 10 | ຈັດໃຫ້ມີ ຫຼືນຳໃຊ້ຜ້າກັນເປື້ອນກ່ອນເລີ່ມດຳເນີນການທັກສະ ແລະເອົາອອກຫຼັງຈາກ ສຳເລັດຂັ້ນຕອນດຳເນີນການບໍ? |
| 11 | ທຳຄວາມສະອາດເທິງໜ້າໂຕະ ແລະເຊັດໃຫ້ແຫ້ງ ແລະກຳຈັດເສດອາຫານຕ່າງໆ ອອກໃຫ້ສະອາດບໍ (ຕົວຢ່າງ, ອາຫານ, ຈານ, ຜ້າຄຸມໂຕະ) ໃນຕອນທ້າຍຂອງຂັ້ນ ຕອນດຳເນີນການ? |
| 12 | ກຳຈັດຜ້າກັນເປື້ອນ (ຖ້ານຳໃຊ້) ຖິ້ມຂີ້ເຫຍື້ອຢ່າງຖືກຕ້ອງບໍ? |
| 13 | ໃຊ້ມາດຕະການຄວບຄຸມການຕິດເຊື້ອ ແລະການປ້ອງກັນລ່ວງໜ້າຕາມມາດຕະຖານ ເພື່ອປົກປ້ອງຄົນເຈັບ ແລະ HCA ຕະຫຼອດຂັ້ນຕອນດຳເນີນການບໍ? |
| 14 | ສ້າງໃຫ້ເກີດຄວາມຕ້ອງການທາງສັງຄົມ ແລະມະນຸດຂອງຄົນເຈັບຕະຫຼອດຂັ້ນຕອນດຳ ເນີນການບໍ? |
| 15 | ສ້າງໃຫ້ເກີດສິດຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 16 | ສ້າງໃຫ້ເກີດຄວາມປອດໄພຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 17 | ສ້າງໃຫ້ເກີດຄວາມສະດວກສະບາຍຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 18 | ປະສິງນຳໃຊ້ທົ່ວໄປໄວ້ພາຍໃນບ່ອນທີຄົນເຈັບສາມາດໄປເອົາມາໄດ້ ໃນຕອນທ້າຍ ຂອງ ການດູແລບໍ (ຕົວຢ່າງ, ໂທລະສັບ, ແວ່ນຕາ, ຣີໂໝດ, ເຈ້ຍອະນາໄມ, ຈອກນ້ຳ)? |

| ຊ່ວຍຄົນເຈັບຍ່າງໄປມາ | |
|---|---|
| ຄົນເຈັບນັ່ງຢູ່ໃນຕັ່ງອີ້ ເມື່ອການດູແລເລີ່ມຕົ້ນຂຶ້ນສຳລັບທັກສະນີ້. ຄົນເຈັບຕ້ອງການໃຫ້ມີ ການຊ່ວຍເຫຼືອທີ່ກຽມພ້ອມໄວ້ ແລະບໍ່ໃຊ້ເຄື່ອງຊ່ວຍຢ່າງອັນໃດ. ບົດບາດຂອງຄົນເຈັບ ແມ່ນຜູ້ສະໝັກເຂົ້າ ສອບຄົນອື່ນເປັນຄົນເຮັດ. | |
| ຜູ້ສະໝັກເຂົ້າສອບ: | |
| 1 | ແນະນຳຕົວເອງໃຫ້ກັບຄົນເຈັບຮູ້ຈັກບໍ ເມື່ອເລີ່ມຕົ້ນການດູແລ? |
| 2 | ອະທິບາຍຈຸດໝາຍປາຍທາງການຍ່າງ ກ່ອນທີ່ຄົນເຈັບຈະເລີ່ມຍ່າງບໍ? |
| 3 | ໃຫ້ຄົນເຈັບອຽງໄປບ່ອນນັ່ງທາງໜ້າຂອງອີ້ກ່ອນຢືນຂຶ້ນບໍ? |
| 4 | ໃຫ້ສັນຍານຄົນເຈັບໃຫ້ດັນຂຶ້ນຈາກຕັ່ງດ້ວຍແຂນ ເພື່ອຢືນຂຶ້ນບໍ? |
| 5 | ກຽມໃຫ້ຄົນເຈັບຢືນຂຶ້ນ ໂດຍການວາງຕຳແໜ່ງຫົວເຂົ່າຢູ່ທີ່ມຸມ 90 ອົງສາໂດຍໃຫ້ຕີນຢຽບແໜ້ນຢູ່ເທິງພື້ນບໍ? |
| 6 | ເອົາມືໂຈມແຂນ, ຫຼັງ ແລະແອວຂອງຄົນເຈັບ ເມື່ອຄົນເຈັບຢືນຂຶ້ນບໍ? |
| 7 | ໃຫ້ສັນຍານບອກຄົນເຈັບໃຫ້ຢືນຂຶ້ນບໍ? |
| 8 | ຍ່າງໄປດ້ານຫຼັງເລັກນ້ອຍ ແລະໄປທາງຂ້າງດ້ານໜຶ່ງຂອງຄົນເຈັບບໍ ໃນຂະນະທີ່ກຳ ລັງຍ່າງ? |
| 9 | ຍ່າງໄປຍ່າງມາກັບຄົນເຈັບຕາມໄລຍະທາງທີ່ຕ້ອງການບໍ? |
| 10 | ຖາມຄົນເຈັບບໍວ່າຮູ້ສຶກແນວໃດ ຫຼັງຈາກທີ່ຢືນຂຶ້ນ ຫຼືໃນຂະນະທີ່ຍ່າງໄປມາ? |

| ຊ່ວຍຄົນເຈັບຍ່າງໄປມາ | |
|---|---|
| 11 | ໃຫ້ສັນຍານການວາງຕຳແໜ່ງກ່ອນທີ່ຄົນເຈັບຈະນັ່ງ, ດ້ວຍການເອົາຂາເຂົ້າສູນກາງ ບ່ອນນັ່ງຂອງຕັ່ງອີ້ ເພື່ອການນັ່ງທີ່ປອດໄພບໍ? |
| 12 | ໃຫ້ສັນຍານຄົນເຈັບໃຫ້ເຂົ້າໄປເຖິງຕັ່ງອີ້ກ່ອນນັ່ງລົງບໍ? |
| 13 | ເອົາມືໂຈມແຂນ, ຫຼັງ ຫຼືແອວຂອງຄົນເຈັບ ເມື່ອຄົນເຈັບນັ່ງບໍ? |
| 14 | ປ່ອຍໃຫ້ຄົນເຈັບນັ່ງລົງຢ່າງປອດໄພຢູ່ໃນຕັ່ງອີ ດ້ວຍການໃຫ້ສະໂພກໄປອີງໃສ່ດ້ານ ຫຼັງຂອງຕັ່ງບໍ? |
| 15 | ໃຊ້ມາດຕະການຄວບຄຸມການຕິດເຊື້ອ ແລະການປ້ອງກັນລ່ວງໜ້າຕາມມາດ ຕະຖານ ເພື່ອປົກປ້ອງຄົນເຈັບ ແລະ HCA ຕະຫຼອດຂັ້ນຕອນດຳເນີນການບໍ? |
| 16 | ສ້າງໃຫ້ເກີດຄວາມຕ້ອງການທາງສັງຄົມ ແລະມະນຸດຂອງຄົນເຈັບຕະຫຼອດຂັ້ນ ຕອນດຳເນີນການບໍ? |
| 17 | ສ້າງໃຫ້ເກີດສິດຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 18 | ສ້າງໃຫ້ເກີດຄວາມປອດໄພຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 19 | ສ້າງໃຫ້ເກີດຄວາມສະດວກສະບາຍຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 20 | ປະສິງນຳໃຊ້ທົ່ວໄປໄວ້ພາຍໃນບ່ອນທີຄົນເຈັບສາມາດໄປເອົາມາໄດ້ ໃນຕອນທ້າຍ ຂອງການດູແລບໍ (ຕົວຢ່າງ, ໂທລະສັບ, ແວ່ນຕາ, ຣີໂໝດ, ເຈ້ຍອະນາໄມ, ຈອກນ້ຳ)? |

| ຊ່ວຍຄົນເຈັບກິນຢາ | |
|---|---|
| ຄົນເຈັບກຳລັງນັ່ງຢູ່ທີ່ໂຕະ ໃນຂະນະທີ່ຈັດການດູແລເລີ່ມຕົ້ນໃຫ້. ຄົນເຈັບບໍ່ສາມາດເປີດ ຂວດຢາ ຫຼືຖອກຢາຂອງລາວ/ນາງອອກມາໄດ້. ຂວດຢາມີທຽນໄຂທີ່ຜູ້ສະໝັກເຂົ້າສອບຈະ ແກ້ງທຳ ແມ່ນເປັນເມັດຢາສຳລັບການທົດສອບ. ບົດບາດຂອງຄົນເຈັບແມ່ນຜູ້ສະໝັກເຂົ້າ ສອບຄົນອື່ນເປັນຄົນ ເຮັດ. | |
| ຜູ້ສະໝັກເຂົ້າສອບ: | |
| 1 | ແນະນຳຕົວເອງໃຫ້ກັບຄົນເຈັບຮູ້ຈັກບໍ ເມື່ອເລີ່ມຕົ້ນການດູແລ? |
| 2 | ກວດເບິ່ງກຳນົດການໃຫ້ກິນຢາຂອງຄົນເຈັບບໍ? |
| 3 | ບອກໃຫ້ຄົນເຈັບຮູ້ບໍວ່າ ມັນເປັນເວລາທີ່ຕ້ອງກິນຢາແລ້ວ? |
| 4 | ເລືອກຢາທີ່ມີປ້າຍໝາຍບອກທີ່ມີຊື່ຂອງຄົນເຈັບ? |
| 5 | **ເລືອກຂວດຢາທີ່ຖືກຕ້ອງບໍ?** |
| 6 | ທວນຄືນເບິ່ງປ້າຍໝາຍຢາ ກ່ອນເອົາຢາອອກໄປຈາກຂວດ? |
| 7 | ຖອກຢາລົງໃສ່ຝາປິດຂວດຢາ ໂດຍບໍ່ມີການຈັບຢາບໍ? |
| 8 | ໃຫ້ຢາກັບຄົນເຈັບຕາມໂດ່ທີຖືກຕ້ອງ ໂດຍຖອກຈາກຝາຂວດຢາລົງໃສ່ມືໂດຍທີ່ຜູ້ ສະໝັກເຂົ້າສອບບໍ່ມີການສຳຜັດກັບຢາບໍ? |
| 9 | ໃຫ້ສັນຍານບອກຄົນເຈັບກິນຢາບໍ? |
| 10 | **ຊ່ວຍໃຫ້ຄົນເຈັບກິນຢາ ໂດຍທີບໍ່ມີມືຂອງຜູ້ສະໝັກເຂົ້າສອບຢູ່ເທິງມືຂອງຄົນເຈັບ, ຫຼືໂດຍການເອົາປາຍມືຂອງຄົນເຈັບຢິບເອົາຢາ ເພື່ອວາງໃສ່ປາກ, ຫຼືເອົາຢາໃສ່ກັບ ປາກຂອງຄົນເຈັບໂດຍກົງບໍ?** |
| 11 | ເອົາຈອກນ້ຳໃຫ້ຄົນເຈັບ ເພື່ອໃຊ້ໃນການກິນຢາບໍ? |
| 12 | ໃຫ້ສັນຍານກັບຄົນເຈັບ ເພື່ອດື່ມນ້ຳໃນຈອກທີ່ເຕັມບໍ? |
| 13 | ຖາມຄົນເຈັບ ຫຼືກວດເບິງວ່າ ຢານັ້ນຖືກກືນລົງໄປແລ້ວບໍ ຫຼືກວດເບິງວ່າໄດ້ກືນ ແລ້ວບໍ? |
| 14 | ປິດຂວດຢາ ແລະເອົາກັບຢາໄປໄວ້ກ່ອນຈົບຂັ້ນຕອນດຳເນີນການບໍ? |
| 15 | ໃຊ້ມາດຕະການຄວບຄຸມການຕິດເຊື້ອ ແລະການປ້ອງກັນລ່ວງໜ້າຕາມມາດຕະ ຖານ ເພື່ອປົກປ້ອງຄົນເຈັບ ແລະ HCA ຕະຫຼອດຂັ້ນຕອນດຳເນີນການບໍ? |
| 16 | ສ້າງໃຫ້ເກີດຄວາມຕ້ອງການທາງສັງຄົມ ແລະມະນຸດຂອງຄົນເຈັບຕະຫຼອດຂັ້ນຕອນ ດຳເນີນການບໍ? |
| 17 | ສ້າງໃຫ້ເກີດສິດຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 18 | ສ້າງໃຫ້ເກີດຄວາມປອດໄພຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 19 | ສ້າງໃຫ້ເກີດຄວາມສະດວກສະບາຍຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |

| ຊ່ວຍຄົນເຈັບກິນຢາ | |
|---|---|
| 20 | ປະສິງນຳໃຊ້ທົ່ວໄປໄວ້ພາຍໃນບ່ອນທີ່ຄົນເຈັບສາມາດໄປເອົາມາໄດ້ ໃນຕອນທ້າຍ ຂອງ ການດູແລບໍ (ຕົວຢ່າງ, ໂທລະສັບ, ແວ່ນຕາ, ຣີໂໝດ, ເຈ້ຍອະນາໄມ, ຈອກນ້ຳ)? |

| ໃຫ້ການດູແລປາກແກ່ຄົນເຈັບ | |
|---|---|
| ຄົນເຈັບກຳລັງນັ່ງຢູ່ທີ່ໂຕະ ໃນຂະນະທີ່ຈັດການດູແລເລີ່ມຕົ້ນໃຫ້. ຄົນເຈັບບໍ່ສາມາດຖູແຂ້ວ ຂອງລາວ/ນາງໄດ້. ບົດບາດຂອງຄົນເຈັບແມ່ນຜູ້ສະໝັກເຂົ້າສອບຄົນອື່ນເປັນຄົນເຮັດ. | |
| ຜູ້ສະໝັກເຂົ້າສອບ: | |
| 1 | ແນະນຳຕົວເອງໃຫ້ກັບຄົນເຈັບຮູ້ຈັກບໍ ເມື່ອເລີ່ມຕົ້ນການດູແລ? |
| 2 | ໃຊ້ຖົງມືທີ່ສະອາດກ່ອນການຖູແຂ້ວບໍ? |
| 3 | ເອົາແປງຖູແຂ້ວຈຸ່ມນ້ຳໃຫ້ປຽກກ່ອນຖູແຂ້ວຂອງຄົນເຈັບບໍ? |
| 4 | ເອົາຢາຖູແຂ້ວໃສ່ແປງຖູແຂ້ວກ່ອນຖູແຂ້ວຂອງຄົນເຈັບບໍ? |
| 5 | ຖູແຂ້ວຂອງຄົນເຈັບທາງດ້ານເທິງ ແລະດ້ານຂ້າງບໍ? |
| 6 | ໃຊ້ການເຄືອນທີ່ເປັນວົງຮອບເບົາໆບໍ ເມື່ອຖູແຂ້ວ ແລະເຫືອກຂອງຄົນເຈັບທາງ ດ້ານຂ້າງ? |
| 7 | ຖູ, ຫຼືຂໍຖູລີ້ນຂອງຄົນເຈັບບໍ? |
| 8 | ເອົານ້ຳສະອາດໃສ່ຈອກໃຫ້ກັບຄົນເຈັບ ເພື່ອບ້ວນປາກບໍ? |
| 9 | ຖືຊາມ ຫຼືຈອກ (ຈອກແຍກຕ່າງຫາກ) ໄວ້ຢູ່ໃກ້ກັບຄາງຂອງຄົນເຈັບ ເພື່ອຮັບເອົາ ນ້ຳບ້ວນປາກ ຫຼືນ້ຳລາຍບໍ? |
| 10 | ຮັກສາໃຫ້ບໍລິເວນປາກຂອງຄົນເຈັບສະອາດ ແລະແຫ້ງດີເມື່ອເວລາສຳເລັດການດູ ແລປາກບໍ? |
| 11 | ໃຊ້ເຄື່ອງກັນ (ເຊັ່ນ: ຜ້າກັນເປື້ອນ) ເພື່ອປ້ອງກັນເຄື່ອງນຸ່ງຂອງຄົນເຈັບບໍໃນຂະນະທີ່ ກຳລັງໃຫ້ການດູແລປາກ ຫຼືເອົາອອກໄປ ໃນເວລາດຳເນີນຂັ້ນຕອນສຳເລັດ? |
| 12 | ລ້າງ ແລະຕາກງ້ຽງ ແລະລ້າງແປງຖູແຂ້ວກ່ອນເກັບມ້ຽນບໍ? |
| 13 | ກຳຈັດຜ້າລີນິນທີ່ໃຊ້ແລ້ວ ແລະຂີ້ເຫຍື້ອຢ່າງຖືກວິທີ ແລະເຊັດໂຕະເທິງຕຽງນອນ ໃຫ້ແຫ້ງບໍ ໃນເວລາດຳເນີນຂັ້ນຕອນສຳເລັດ? |
| 14 | ເອົາຖົງມືອອກ ໂດຍທີ່ບໍ່ມີການປົນເປື້ອນໃສ່ຕົວເອງບໍ ຫຼັງຈາກທີ່ລ້າງ ແລະເກັບມ້ຽນ ອຸປະກອນແລ້ວ? |
| 15 | ໃຊ້ມາດຕະການຄວບຄຸມການຕິດເຊື້ອ ແລະການປ້ອງກັນລ່ວງໜ້າຕາມມາດຕະຖານ ເພື່ອປົກປ້ອງຄົນເຈັບ ແລະ HCA ຕະຫຼອດຂັ້ນຕອນດຳເນີນການບໍ? |
| 16 | ສ້າງໃຫ້ເກີດຄວາມຕ້ອງການທາງສັງຄົມ ແລະມະນຸດຂອງຄົນເຈັບຕະຫຼອດຂັ້ນຕອນ ດຳເນີນການບໍ? |
| 17 | ສ້າງໃຫ້ເກີດສິດຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 18 | ສ້າງໃຫ້ເກີດຄວາມປອດໄພຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 19 | ສ້າງໃຫ້ເກີດຄວາມສະດວກສະບາຍຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 20 | ປະສິງນຳໃຊ້ທົ່ວໄປໄວ້ພາຍໃນບ່ອນທີ່ຄົນເຈັບສາມາດໄປເອົາມາໄດ້ ໃນຕອນທ້າຍ ຂອງການດູແລບໍ (ຕົວຢ່າງ, ໂທລະສັບ, ແວ່ນຕາ, ຣີໂໝດ, ເຈ້ຍອະນາໄມ, ຈອກນ້ຳ)? |

| ທຳຄວາມສະອາດ ແລະເກັບມ້ຽນແຂ້ວປອມຂອງຄົນເຈັບ | |
|---|---|
| ຄົນເຈັບກຳລັງນັ່ງຢູ່ໂຕະ ຫຼືນອນຢູ່ໃນຕຽງ ໃນຂະນະທີ່ຈັດໃຫ້ມີການດູແລນີ້ໃຫ້. ຄົນເຈັບຈະ ຍື່ນໂຄງແຂ້ວທີ່ມີແຂ້ວປອມໃຫ້ກັບຜູ້ສະໝັກເຂົ້າສອບ. ບົດບາດຂອງຄົນເຈັບແມ່ນຜູ້ສະໝັກ ເຂົ້າສອບຄົນອື່ນເປັນຄົນເຮັດ. | |
| ຜູ້ສະໝັກເຂົ້າສອບ: | |
| 1 | ແນະນຳຕົວເອງໃຫ້ກັບຄົນເຈັບຮູ້ຈັກບໍ ເມື່ອເລີ່ມຕົ້ນການດູແລ? |
| 2 | ໃຊ້ຖົງມືກ່ອນຈັບເອົາແຂ້ວປອມບໍ? |
| 3 | ໃຊ້ນ້ຳເຢັນ ຫຼືນ້ຳອຸ່ນໆບໍ ເມື່ອອະນາໄມ ແລະລ້າງແຂ້ວປອມ? |
| 4 | ໃຊ້ຢາຖູແຂ້ວອະນາໄມແຂ້ວປອມບໍ? |
| 5 | ຖູດ້ານໃນ ແລະດ້ານນອກຂອງແຂ້ວປອມບໍ? |
| 6 | ລ້າງແຂ້ວປອມຢູ່ໃນນ້ຳບໍ ເພື່ອກຳຈັດຢາຖູແຂ້ວອອກຫຼັງຈາກຖູແລ້ວ? |
| 7 | ວາງແຂ້ວປອມທີ່ສະອາດແລ້ວໃສ່ໃນໂຄງແຂ້ວທີ່ມີນ້ຳສະອາດ, ເຢັນ ຫຼືອຸ່ນໆ ຫຼືນ້ຳຢາໃສ່ແຂ້ວປອມບໍ? |
| 8 | ປ້ອງກັນການປົນເປື້ອນຂອງແຂ້ວປອມຕະຫຼອດຂັ້ນຕອນດຳເນີນການບໍ (ເຊັ່ນ: ປ່ອຍພູຢູ່ໃນນ້ຳຂອງງ້ຽງ ຫຼືຕັ້ງແຂ້ວປອມໄວ້ຢູ່ໃນບ່ອນທີ່ບໍ່ມີການປົກປິດເລີຍ)? |
| 9 | ໃຊ້ເຕັກນິກ ເພື່ອຫຼຸດຜ່ອນຄວາມສ່ຽງຂອງການແຕກຂອງແຂ້ວປອມບໍ ຖ້າເກີດຕົກ ລົງໃນເວລາທຳຄວາມສະອາດ (ເຊັ່ນ: ຖູແຂ້ວປອມຢູ່ເທິງອ່າງທີ່ມີຜ້າຮອງ/<br>ເຈ້ຍເຊັດ/ຜ້າເຊັດ, ທີ່ມີນ້ຳເຕັມຢູ່ໃນອ່າງນັ້ນໂດຍກົງ)? |
| 10 | ປ່ອຍນ້ຳອອກຈາກອ່າງ ແລະເອົາຜ້າຮອງດ້ານໃນ (ຖ້າໄດ້ໃຊ້) ອອກບໍ ໃນຕອນທ້າຍ ຂອງການປະຕິບັດທັກສະ? |
| 11 | ລ້າງແປງຖູແຂ້ວ, ເກັບມ້ຽນອຸປະກອນ, ແລະຖິ້ມຂີ້ເຫຍື້ອ ແລະຜ້າລີນິນທີ່ໃຊ້ແລ້ວ ຢ່າງຖືກຕ້ອງບໍ? |
| 12 | ເອົາຖົງມືອອກ ໂດຍທີ່ບໍ່ມີການປົນເປື້ອນໃສ່ຕົວເອງບໍ ຫຼັງຈາກທີ່ລ້າງ ແລະເກັບມ້ຽນ ອຸປະກອນແລ້ວ? |
| 13 | ໃຊ້ມາດຕະການຄວບຄຸມການຕິດເຊື້ອ ແລະການປ້ອງກັນລ່ວງໜ້າຕາມມາດຕະ ຖານ ເພື່ອປົກປ້ອງຄົນເຈັບ ແລະ HCA ຕະຫຼອດຂັ້ນຕອນດຳເນີນການບໍ? |
| 14 | ສ້າງໃຫ້ເກີດຄວາມຕ້ອງການທາງສັງຄົມ ແລະມະນຸດຂອງຄົນເຈັບຕະຫຼອດຂັ້ນຕອນ ດຳເນີນການບໍ? |
| 15 | ສ້າງໃຫ້ເກີດສິດຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 16 | ສ້າງໃຫ້ເກີດຄວາມປອດໄພຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 17 | ສ້າງໃຫ້ເກີດຄວາມສະດວກສະບາຍຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 18 | ປະສິງນຳໃຊ້ທົ່ວໄປໄວ້ພາຍໃນບ່ອນທີ່ຄົນເຈັບສາມາດໄປເອົາມາໄດ້ ໃນຕອນທ້າຍຂອງການດູແລບໍ (ຕົວຢ່າງ, ໂທລະສັບ, ແວ່ນຕາ, ຣີໂໝດ, ເຈ້ຍອະນາໄມ, ຈອກນ້ຳ)? |

| ໃຫ້ການດູແລເລັບມືເລັບຕີນ ແລະມືແກ່ຄົນເຈັບ | |
|---|---|
| ຄົນເຈັບກຳລັງນັ່ງຢູ່ທີ່ໂຕະ ໃນຂະນະທີ່ຈັດການດູແລເລີ່ມຕົ້ນໃຫ້. ສຳລັບການທົດສອບ, ບອກໃຫ້ຜູ້ສະໝັກເຂົ້າສອບເຮັດການດູແລກັບແຕ່ມືເບື້ອງດຽວກໍ່ພໍ. ບົດບາດຂອງຄົນເຈັບ ແມ່ນຜູ້ສະໝັກເຂົ້າສອບຄົນອື່ນເປັນຄົນເຮັດ. | |
| ຜູ້ສະໝັກເຂົ້າສອບ: | |
| 1 | ແນະນຳຕົວເອງໃຫ້ກັບຄົນເຈັບຮູ້ຈັກບໍ ເມື່ອເລີ່ມຕົ້ນການດູແລ? |
| 2 | ໃຊ້ນ້ຳໃນອຸນນະພູມທີ່ມີຄວາມປອດໄພ ເພື່ອຈຸ່ມແຊ່ມືບໍ? |
| 3 | ຖາມຄົນເຈັບວ່າ ອຸນນະພູມຂອງນ້ຳພໍດີແລ້ວບໍ? |
| 4 | ຈຸ່ມແຊ່ມືຂອງຄົນເຈັບລົງໃນອ່າງນ້ຳ ກ່ອນທຳຄວາມສະອາດ ຫຼືຕັດເລັບບໍ? |
| 5 | ເຊັດມືຂອງຄົນເຈັບໃຫ້ແຫ້ງ, ລວມທັງແຫວ່ງນິ້ວມືນຳ ຫຼັງຈາກທີ່ເອົາອອກມາຈາກ ນ້ຳ ແລະກ່ອນທີ່ຈະທຳຄວາມສະອາດ ຫຼືຕັດເລັບບໍ? |
| 6 | ເຊັດມືຂອງຄົນເຈັບໃຫ້ແຫ້ງດ້ວຍຜ້າເຊັດ, ບໍ່ແມ່ນດ້ວຍການຖູບໍ? |
| 7 | ໃຊ້ໄມ້ເຂ່ຍເລັບມື ເພື່ອທຳຄວາມສະອາດກ້ອງເລັບ ແລະເອົາສິ່ງເກາະຕິດອອກບໍ? |
| 8 | ເຊັດໄມ້ເຂ່ຍເລັບໃສ່ຜ້າເຊັດ ເພື່ອກຳຈັດສິ່ງເກາະຕິກອອກກ່ອນທຳຄວາມສະອາດ ເລັບອື່ນບໍ? |
| 9 | ໃຊ້ສະໄບຖູເລັບ ເພື່ອຖູເລັບບໍ? |
| 10 | ເຮັດໃຫ້ປາຍເລັບກ້ຽງ ແລະບໍ່ມີຮີມທີ່ຊາຢູ່ບໍ? |
| 11 | ຈັດໃຫ້ ຫຼືໃຊ້ໂລຊັນທາມືໃຫ້ບໍ ຫຼັງຈາກທີ່ແຕ່ງເລັບແລ້ວ? |
| 12 | ໃສ່ຖົງມືບໍ ເມື່ອເຮັດການຕັດແຕ່ງເລັບມື ແລະໃນຂະນະທີ່ລ້າງ ແລະເຊັດອຸປະກອນ ໃຫ້ແຫ້ງ? |
| 13 | ເກັບອຸປະກອນ, ກຳຈັດຜ້າລີນິນທີ່ໃຊ້ແລ້ວ ແລະຂີ້ເຫຍື້ອຢ່າງຖືກວິທີ ແລະເຊັດ ໂຕະເທິງຕຽງນອນໃຫ້ແຫ້ງບໍ ໃນເວລາດຳເນີນຂັ້ນຕອນສຳເລັດ? |
| 14 | ເອົາຖົງມືອອກ ໂດຍທີ່ບໍ່ມີການປົນເປື້ອນໃສ່ຕົວເອງບໍ ຫຼັງຈາກທີ່ລ້າງ ແລະເກັບມ້ຽນ ອຸປະກອນແລ້ວ? |

| ໃຫ້ການດູແລເລັບມືເລັບຕີນ ແລະມືແກ່ຄົນເຈັບ | |
|---|---|
| 15 | ໃຊ້ມາດຕະການຄວບຄຸມການຕິດເຊື້ອ ແລະການປ້ອງກັນລ່ວງໜ້າຕາມມາດຕະ ຖານ ເພື່ອປົກປ້ອງຄົນເຈັບ ແລະ HCA ຕະຫຼອດຂັ້ນຕອນດໍາເນີນການບໍ? |
| 16 | ສ້າງໃຫ້ເກີດຄວາມຕ້ອງການທາງສັງຄົມ ແລະມະນຸດຂອງຄົນເຈັບຕະຫຼອດຂັ້ນຕອນ ດໍາເນີນການບໍ? |
| 17 | ສ້າງໃຫ້ເກີດສິດຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 18 | ສ້າງໃຫ້ເກີດຄວາມປອດໄພຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 19 | ສ້າງໃຫ້ເກີດຄວາມສະດວກສະບາຍຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 20 | ປະສິງນໍາໃຊ້ທົ່ວໄປໄວ້ພາຍໃນບ່ອນທີ່ຄົນເຈັບສາມາດໄປເອົາມາໄດ້ ໃນຕອນທ້າຍ ຂອງການດູແລບໍ (ຕົວຢ່າງ, ໂທລະສັບ, ແວ່ນຕາ, ຣີໂໝດ, ເຈ້ຍອະນາໄມ, ຈອກນໍ້າ)? |

| ໃຫ້ການດູແລຕີນແກ່ຄົນເຈັບ | |
|---|---|
| ຄົນເຈັບກໍາລັງນັ່ງຢູ່ໃນຕັ່ງອີ້ ໃນຂະນະທີ່ຈັດໃຫ້ມີການດູແລນີ້ໃຫ້. ສໍາລັບການທົດສອບ, ບອກໃຫ້ຜູ້ສະໝັກເຂົ້າສອບເຮັດການດູແລກັບແຕ່ຕີນເບື້ອງດຽວກໍ່ພໍ. ບົດບາດຂອງຄົນເຈັບ ແມ່ນຜູ້ສະໝັກເຂົ້າສອບຄົນອື່ນເປັນຄົນເຮັດ. | |
| ຜູ້ສະໝັກເຂົ້າສອບ: | |
| 1 | ແນະນໍາຕົວເອງໃຫ້ກັບຄົນເຈັບຮູ້ຈັກບໍ ເມື່ອເລີ່ມຕົ້ນການດູແລ? |
| 2 | ສັງເກດເບິ່ງສະພາບຂອງຜິວໜັງຢູ່ຕີນ ໂດຍການລ່າງຫົວໂປ້ຕີນອອກ ເພື່ອກວດເບິ່ງ ແຫວ່ງຕີນ ແລະປົ່ນຕີນ ເພື່ອເບິ່ງສົ້ນຕີນ ກ່ອນເລີ່ມທໍາຄວາມສະອາດຕີນບໍ? |
| 3 | ຈຸ່ມແຊ່ຕີນຂອງຄົນເຈັບລົງໃນນໍ້າທີ່ມີຢູ່ໃນອ່າງ ກ່ອນທໍາຄວາມສະອາດ ຫຼືຕັດເລັບບໍ? |
| 4 | ໃຊ້ນໍ້າໃນອຸນນະພູມທີ່ມີຄວາມປອດໄພ ເພື່ອຈຸ່ມແຊ່ຕີນບໍ? |
| 5 | ຖາມຄົນເຈັບບໍວ່າ ອຸນນະພູມຂອງນໍ້າພໍດີແລ້ວບໍ ກ່ອນຈຸ່ມລົງໄປໝົດຕີນ? |
| 6 | ຈຸ່ມຕີນລົງໄປໃນນໍ້າທີ່ມີນໍ້າຢູ່ໃນອ່າງໃນລະດັບທີ່ພໍດີຖ້ວມຕີນບໍ? |
| 7 | ເກັບນໍ້າໃນອ່າງໄວ້ບໍ່ໃຫ້ມີສະບູ ເພື່ອໃຊ້ເປັນນໍ້າລ້າງໂດຍ: (1) ລ້າງຕີນດ້ວຍຜ້າເຊັດ ທີ່ມີການເອົາສະບູ່ໃສ່ກັບຜ້າເຊັດນັ້ນໂດຍກົງ ແທນທີ່ຈະເອົາສະບູ່ເຂົ້າໄປໃນອ່າງ ນໍ້າ; ຫຼື (2) ໃຊ້ອ່າງນໍ້າສອງອັນແຍກກັນຄື: ອັນໜຶ່ງໄວ້ສໍາລັບລ້າງ ແລະອັນໜຶ່ງໄວ້ ສໍາລັບໄລອອກບໍ? |
| 8 | ລ້າງຕີນຂອງຄົນເຈັບໃຫ້ທົ່ວ, ລວມທັງແຫວ່ງຕີນນໍາດ້ວຍຜູ້ທີ່ມີສະບູ່ຫຼັງຈາກການ ຈຸ່ມແຊ່ບໍ? |
| 9 | ໄລເອົາສະບູ່ອອກຈາກຕີນ ແລະແຫວ່ງຕີນບໍ? |
| 10 | ເຊັດຕີນຂອງຄົນເຈັບໃຫ້ແຫ້ງ, ລວມທັງແຫວ່ງນິ້ວຕີນນໍາ ຫຼັງຈາກທີ່ເອົາອອກມາ ຈາກນໍ້າ ແລະກ່ອນທີ່ຈະທໍາຄວາມສະອາດ ຫຼືຕັດເລັບບໍ? |
| 11 | ເຊັດຕີນຂອງຄົນເຈັບໃຫ້ແຫ້ງດ້ວຍຜ້າເຊັດ, ບໍ່ແມ່ນດ້ວຍການຖູບໍ? |
| 12 | ໃຊ້ໄມ້ເຂ່ຍເລັບ ເພື່ອທໍາຄວາມສະອາດກ້ອງເລັບ ແລະເອົາສິ່ງເກາະຕິດອອກບໍ? |
| 13 | ເຊັດໄມ້ເຂ່ຍເລັບໃສ່ຜ້າເຊັດ ເພື່ອກໍາຈັດສິ່ງເກາະຕິກອອກກ່ອນທໍາຄວາມສະອາດ ເລັບອື່ນບໍ? |
| 14 | ໃຊ້ສະໄບຖູເລັບ ເພື່ອຖູເລັບໃຫ້ຊື່ໄປທັງໝົດບໍ? |
| 15 | ເຮັດໃຫ້ຂອບປາຍເລັບກ້ຽງ ແລະບໍ່ມີຮີມທີ່ຊາຢູ່ບໍ? |
| 16 | ໃຊ້ໂລຊັນທາຕີນຫຼັງຈາກດູແລເລັບ, ໂດຍບໍ່ມີການເອົາໂລຊັນໃສ່ເຂົ້າໄປໃນແຫວ່ງ ຕີນບໍ? |
| 17 | ໃສ່ຖົງມືບໍ ເມື່ອເຮັດການຕັດແຕ່ງເລັບຕີນ ແລະໃນຂະນະທີ່ລ້າງ ແລະເຊັດອຸປະ ກອນໃຫ້ແຫ້ງ? |
| 18 | ເກັບອຸປະກອນ, ກໍາຈັດຜ້າລິນິນທີ່ໃຊ້ແລ້ວ ແລະຂີ້ເຫຍື້ອຢ່າງຖືກວິທີ ແລະເຊັດ ພື້ນໃຫ້ແຫ້ງບໍ ໃນເວລາດໍາເນີນຂັ້ນຕອນສໍາເລັດ? |
| 19 | ເອົາຖົງມືອອກ ໂດຍທີ່ບໍ່ມີການປົນເປື້ອນໃສ່ຕົວເອງບໍ ຫຼັງຈາກທີ່ລ້າງ ແລະເກັບມ້ຽນ ອຸປະກອນແລ້ວ? |
| 20 | ໃຊ້ມາດຕະການຄວບຄຸມການຕິດເຊື້ອ ແລະການປ້ອງກັນລ່ວງໜ້າຕາມມາດຕະ ຖານ ເພື່ອປົກປ້ອງຄົນເຈັບ ແລະ HCA ຕະຫຼອດຂັ້ນຕອນດໍາເນີນການບໍ? |
| 21 | ສ້າງໃຫ້ເກີດຄວາມຕ້ອງການທາງສັງຄົມ ແລະມະນຸດຂອງຄົນເຈັບຕະຫຼອດຂັ້ນຕອນ ດໍາເນີນການບໍ? |
| 22 | ສ້າງໃຫ້ເກີດສິດຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 23 | ສ້າງໃຫ້ເກີດຄວາມປອດໄພຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 24 | ສ້າງໃຫ້ເກີດຄວາມສະດວກສະບາຍຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 25 | ປະສິງນໍາໃຊ້ທົ່ວໄປໄວ້ພາຍໃນບ່ອນທີ່ຄົນເຈັບສາມາດໄປເອົາມາໄດ້ ໃນຕອນທ້າຍ ຂອງການດູແລບໍ (ຕົວຢ່າງ, ໂທລະສັບ, ແວ່ນຕາ, ຣີໂໝດ, ເຈ້ຍອະນາໄມ, ຈອກນໍ້າ)? |

| ຊ່ວຍນຸ່ງເຄື່ອງໃຫ້ຄົນເຈັບຜູ້ທີ່ແຂນບໍ່ມີແຮງ | |
|---|---|
| ຄົນເຈັບກໍາລັງນັ່ງຢູ່ໃນຕັ່ງອີ້ ໃນຂະນະທີ່ຈັດໃຫ້ມີການດູແລນີ້ໃຫ້. ຄົນເຈັບສາມາດຍືນໄດ້. ຄົນເຈັບນຸ່ງເສື້ອທີ່ເຊີດທີ່ສະອາດ ແລະໃສ່ສະຫຼົບຢູ່ແລ້ວ, ແລະມີຄວາມຕ້ອງການໃຫ້ຊ່ວຍ ນຸ່ງເສື້ອ, ໂສ້ງ, ໃສ່ຖົງຕີນ ແລະໃສ່ເກີບໃຫ້. ບົດບາດຂອງຄົນເຈັບແມ່ນຜູ້ສະໝັກເຂົ້າສອບ ຄົນອື່ນເປັນຄົນເຮັດ, ແລະສໍາລັບການທົດສອບແມ່ນຈະຊ່ວຍນຸ່ງເຄື່ອງໃຫ້ດ້ວຍລາວ/ນາງ ເອງ. | |
| ຜູ້ສະໝັກເຂົ້າສອບ: | |
| 1 | ແນະນໍາຕົວເອງໃຫ້ກັບຄົນເຈັບຮູ້ຈັກບໍ ເມື່ອເລີ່ມຕົ້ນການດູແລ? |
| 2 | ລວມເອົາຄົນເຈັບເຂົ້າຢູ່ໃນການເລືອກເອົາສິ່ງທີ່ຈະນຸ່ງບໍ? |
| 3 | ເອົາແຂນເສືອວາງໃສ່ເທິງແຂນເບື້ອງບໍ່ມີແຮງກ່ອນໃສ່ແຂນເບື້ອງທີ່ບໍ່ໄດ້ຮັບຜົນກະ ທົບບໍ? |
| 4 | ໃຫ້ສັນຍານຄົນເຈັບ ເພື່ອຊ່ວຍເລື່ອງການນຸ່ງເຄື່ອງບໍ? |
| 5 | ໃຫ້ຄົນເຈັບນັ່ງລົງບໍ ເມື່ອເອົາຕີນ ແລະຂາເຂົ້າໃສ່ໂສ້ງ? |
| 6 | ໃຫ້ການຊ່ວຍເຫຼືອຄົນເຈັບບໍ ເມື່ອດຶງໂສ້ງຂຶ້ນ ຫຼືໃສ່ສາຍຮັດໂສ້ງໄວ້? |
| 7 | ໃຫ້ການຊ່ວຍໃສ່ຖົງຕີນ ແລະໃສ່ເກີບແກ່ຄົນເຈັບ ໃນຂະນະທີ່ນັ່ງຢູ່ບໍ? |
| 8 | ປ່ອຍໃຫ້ຖົງຕີນຮຽບຮ້ອຍ ແລະໃສ່ເກີບໃຫ້ຢ່າງດີບໍ? |
| 9 | ເລື່ອນປາຍຂາຂອງຄົນເຈັບໄປເບົາໆ ແລະເປັນທໍາມະຊາດ, ໂດຍທີ່ບໍ່ໃຫ້ມັນຍືດໄປ ເກີນບໍ ເມື່ອນຸ່ງເຄື່ອງໃຫ້? |
| 10 | ສໍາເລັດການນຸ່ງເຄືອງໃຫ້ດ້ວຍການນຸ່ງເຄືອງເປັນຢ່າງດີ ແລະມີການຈັດແຈງໃຫ້ຢ່າງ ເໝາະສົມບໍ? |
| 11 | ໃຊ້ມາດຕະການຄວບຄຸມການຕິດເຊື້ອ ແລະການປ້ອງກັນລ່ວງໜ້າຕາມມາດຕະ ຖານ ເພື່ອປົກປ້ອງຄົນເຈັບ ແລະ HCA ຕະຫຼອດຂັ້ນຕອນດໍາເນີນການບໍ? |
| 12 | ສ້າງໃຫ້ເກີດຄວາມຕ້ອງການທາງສັງຄົມ ແລະມະນຸດຂອງຄົນເຈັບຕະຫຼອດຂັ້ນຕອນ ດໍາເນີນການບໍ? |
| 13 | ສ້າງໃຫ້ເກີດສິດຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 14 | ສ້າງໃຫ້ເກີດຄວາມປອດໄພຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 15 | ສ້າງໃຫ້ເກີດຄວາມສະດວກສະບາຍຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 16 | ປະສິງນໍາໃຊ້ທົ່ວໄປໄວ້ພາຍໃນບ່ອນທີ່ຄົນເຈັບສາມາດໄປເອົາມາໄດ້ ໃນຕອນທ້າຍ ຂອງການດູແລບໍ (ຕົວຢ່າງ, ໂທລະສັບ, ແວ່ນຕາ, ຣີໂໝດ, ເຈ້ຍອະນາໄມ, ຈອກນໍ້າ)? |

| ໃສ່ຖົງຕີນສູງກວ່າຫົວເຂົ່າໃສ່ຂາຂອງຄົນເຈັບ | |
|---|---|
| ຄົນເຈັບກໍາລັງນອນຢູ່ໃນຕຽງ ເມື່ອການດູແລນີ້ເລີ່ມຕົ້ນສໍາລັບທັກສະນີ້. ສໍາລັບການທົດ ສອບ, ບອກໃຫ້ຜູ້ສະໝັກເຂົ້າສອບໃສ່ຖົງຕີນກັບຂາເບື້ອງດຽວກໍ່ພໍ. ບົດບາດຂອງຄົນເຈັບ ແມ່ນຜູ້ສະໝັກເຂົ້າສອບຄົນອື່ນເປັນຄົນເຮັດ. | |
| ຜູ້ສະໝັກເຂົ້າສອບ: | |
| 1 | ແນະນໍາຕົວເອງໃຫ້ກັບຄົນເຈັບຮູ້ຈັກບໍ ເມື່ອເລີ່ມຕົ້ນການດູແລ? |
| 2 | ກຽມຖົງຕີນທີ່ຈະໃຊ້ ໂດຍການປີ້ນຖົງຕີນດ້ານໃນອອກຢ່າງໜ້ອຍຮອດບໍລິເວນສົ້ນ ຕີນບໍ? |
| 3 | ວາງຕີນເບື້ອງມີຖົງຕີນຢູ່ເທິງຫົວໂປ້ຕີນ, ຕີນ ແລະສົ້ນຕີນບໍ? |
| 4 | ສໍາເລັດການນໍາໃຊ້ຖົງຕີນໃສ່ຕີນເບື້ອງທີ່ມີຫົວໂປ້ຕີນ ແລະສົ້ນຕີນຢູ່ໃນຕໍາແໜ່ງທີ່ ຖືກຕ້ອງຕາມການອອກແບບຖົງຕີນບໍ? |

| ໃສ່ຖົງຕີນສູງກວ່າຫົວເຂົ່າໃສ່ຂາຂອງຄົນເຈັບ | |
|---|---|
| 5 | ດຶງຖົງຕີນຂຶ້ນຕາມຂາບໍ ເພື່ອໃຫ້ແນ່ໃຈວ່າຖົງຕີນບໍ່ບິດ? |
| 6 | ປ່ອຍໃຫ້ຖົງຕີນລຽບຊື່ (ບໍ່ມີການຂົດຕູ້) ບໍ? |
| 7 | ປ່ອຍໃຫ້ມີຊ່ອງຫວ່າງຢູ່ບໍລິເວນນິ້ວຕີນບໍ ທີ່ບໍ່ເຮັດໃຫ້ຖົງຕີນໜີບກັບນິ້ວຕີນແໜ້ນ ໄປ? |
| 8 | ປ່ອຍໃຫ້ຖົງຕີນຍືດຂຶ້ນຮອດຫົວເຂົ່າບໍ? |
| 9 | ຍ້າຍຂາຂອງຄົນເຈັບໄປເບົາໆ, ເຮັດການຄ້ຳຍັນກັບປາຍຂາ, ແລະຫຼີກເວັ້ນບໍ່ໃຫ້ຍືດ ເກີນໄປບໍ ເມື່ອໃຊ້ຖົງຕີນຍືດ? |
| 10 | ໃຊ້ມາດຕະການຄວບຄຸມການຕິດເຊື້ອ ແລະການປ້ອງກັນລ່ວງໜ້າຕາມມາດຕະ ຖານ ເພື່ອປົກປ້ອງຄົນເຈັບ ແລະ HCA ຕະຫຼອດຂັ້ນຕອນດຳເນີນການບໍ? |
| 11 | ສ້າງໃຫ້ເກີດຄວາມຕ້ອງການທາງສັງຄົມ ແລະມະນຸດຂອງຄົນເຈັບຕະຫຼອດຂັ້ນຕອນ ດຳເນີນການບໍ? |
| 12 | ສ້າງໃຫ້ເກີດສິດຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 13 | ສ້າງໃຫ້ເກີດຄວາມປອດໄພຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 14 | ສ້າງໃຫ້ເກີດຄວາມສະດວກສະບາຍຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 15 | ປະສິງນຳໃຊ້ທົ່ວໄປໄວ້ພາຍໃນບ່ອນທີ່ຄົນເຈັບສາມາດໄປເອົາມາໄດ້ ໃນຕອນທ້າຍ ຂອງການດູແລບໍ (ຕົວຢ່າງ, ໂທລະສັບ, ແວ່ນຕາ, ຣີໂໝດ, ເຈ້ຍອະນາໄມ, ຈອກນ້ຳ)? |

| ຈັດໃຫ້ມີການຫັດແຮງຂອບເຂດຂອງການເຄື່ອນໄຫວໄດ້ແບບນິ່ງໆ (ROM) ກັບບ່າໄຫຼ່, ຫົວເຂົ່າ ແລະຂໍ້ຕີນຂອງຄົນເຈັບ | |
|---|---|
| ຄົນເຈັບກຳລັງນອນຢູ່ໃນຕຽງ ເມື່ອການດູແລນີ້ເລີ່ມຕົ້ນສຳລັບທັກສະນີ້. ສຳລັບການທົດ ສອບ, ບອກໃຫ້ຜູ້ສະໝັກເຂົ້າສອບເຮັດການຫັດແຮງຢູ່ຮ່າງກາຍເບື້ອງດຽວກໍ່ພໍ. ບົດບາດ ຂອງຄົນເຈັບແມ່ນຜູ້ສະໝັກເຂົ້າສອບຄົນອື່ນເປັນຄົນເຮັດ. | |
| ຜູ້ສະໝັກເຂົ້າສອບ: | |
| 1 | ແນະນຳຕົວເອງໃຫ້ກັບຄົນເຈັບຮູ້ຈັກບໍ ເມື່ອເລີ່ມຕົ້ນການດູແລ? |
| 2 | ໃຫ້ການຄ້ຳຍັນການຖືແຂນຂອງຄົນເຈັບຢູ່ກ້ອງແຂນສອກ ແລະບໍລິເວນຂໍ້ຕໍ່ແອວ ໃນຂະນະທີ່ກຳລັງຫັດແຮງບ່າໄຫຼ່ບໍ? |
| 3 | ຍົກແຂນທີ່ຢຽດຊື່ຂອງຄົນເຈັບຂຶ້ນຈາກຕຽງໄປຍັງດ້ານຫົວຕຽງ (HOB) ແລະກັບຄືນ ໄປດ້ານຫຼັງໄປຫາຕຽງເປັນການເຮັດຊ້ຳຄືນຄັ້ງໜຶ່ງບໍ (ການຍືດ/ການຍື່ນບ່າໄຫຼ່ ອອກ)? |
| 4 | ຍ້າຍແຂນທີ່ຢຽດຊືຂອງຄົນເຈັບອອກໄປຈາກດ້ານຂ້າງຂອງຮ່າງກາຍໄປຫາຫົວຕຽງ (HOB) ແລະກັບຄືນໄປດ້ານຂ້າງເປັນການເຮັດຊ້ຳຄືນຄັ້ງໜຶ່ງບໍ (ການຈັບ/ການດຶງ ບ່າໄຫຼ່ຄືນ)? |
| 5 | ໃຫ້ການຫັດແຮງໝູນວຽນແກ່ບ່າໄຫຼ່? |
| 6 | ໃຫ້ການຄ້ຳຍັນຫົວເຂົ່າ ແລະຂໍ້ຕີນຂອງຄົນເຈັບ ໃນຂະນະທີ່ກຳລັງຫັດແຮງຫົວເຂົ່າ? |
| 7 | ພັບຫົວເຂົ່າຂອງຄົນເຈັບໄປດ້ານຫຼັງຫາຈຸດທີ່ຢັນຄືນ ແລະຈາກນັ້ນ ເຮັດການຍືດ ຫົວເຂົ່າອອກຊື່ເປັນການເຮັດຊ້ຳຄືນຄັ້ງໜຶ່ງບໍ (ການຍືດ/ການຍື່ນຫົວເຂົ່າອອກ)? |
| 8 | ໃຫ້ການຄ້ຳຍັນການຖືຂໍ້ຕີນຂອງຄົນເຈັບ, ການຖືຢູ່ກ້ອງບໍລິເວນຂໍ້ຕີນແລະຕີນ, ໃນຂະນະທີ່ກຳລັງຫັດແຮງຂໍ້ຕີນບໍ? |
| 9 | ຊຸກຕີນໄປທາງໜ້າໄປຍັງຂາ, ແລະຢູ່ໃນການແຍກຕ່າງຫາກ ຊຸກຕີນໃຫ້ປິ່ນລົງໄປຍັງ ຕີນຂອງຕຽງ (FOB), ເປັນການເຮັດຊ້ຳຄືນອີກເທື່ອໜຶ່ງ (ການຍືດ/ການຍື່ນຂໍ້ຕີນ ອອກ) ບໍ? |
| 10 | ຈັດໃຫ້ມີການຫັດແຮງ ROM ສາມ (3) ຄັ້ງສຳລັບການຫັດແຮງແຕ່ລະອັນຂອງບ່າ ໄຫຼ່, ຫົວເຂົ່າ, ແລະຂໍ້ຕີນບໍ? |
| 11 | ຖາມຄົນເຈັບບໍກ່ຽວກັບລະດັບຄວາມສະບາຍໃນຕະຫຼອດການຫັດແຮງນັ້ນ? |
| 12 | ໃຫ້ການເຄື່ອນໄຫວທີ່ມີການຄວບຄຸມ, ເຮັດຊ້າ, ເຮັດເບົາໆບໍ ເມື່ອເຮັດການຫັດແຮງ ບ່າໄຫຼ່, ຫົວເຂົ່າ ແລະຂໍ້ຕີນ? |
| 13 | ໃຊ້ມາດຕະການຄວບຄຸມການຕິດເຊື້ອ ແລະການປ້ອງກັນລ່ວງໜ້າຕາມມາດຕະ ຖານ ເພື່ອປົກປ້ອງຄົນເຈັບ ແລະ HCA ຕະຫຼອດຂັ້ນຕອນດຳເນີນການບໍ? |

| ຈັດໃຫ້ມີການຫັດແຮງຂອບເຂດຂອງການເຄື່ອນໄຫວໄດ້ແບບນິ່ງໆ (ROM) ກັບບ່າໄຫຼ່, ຫົວເຂົ່າ ແລະຂໍ້ຕີນຂອງຄົນເຈັບ | |
|---|---|
| 14 | ສ້າງໃຫ້ເກີດຄວາມຕ້ອງການທາງສັງຄົມ ແລະມະນຸດຂອງຄົນເຈັບຕະຫຼອດຂັ້ນ ຕອນດຳເນີນການບໍ? |
| 15 | ສ້າງໃຫ້ເກີດສິດຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 16 | ສ້າງໃຫ້ເກີດຄວາມປອດໄພຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 17 | ສ້າງໃຫ້ເກີດຄວາມສະດວກສະບາຍຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 18 | ປະສິງນຳໃຊ້ທົ່ວໄປໄວ້ພາຍໃນບ່ອນທີ່ຄົນເຈັບສາມາດໄປເອົາມາໄດ້ ໃນຕອນທ້າຍ ຂອງການດູແລບໍ (ຕົວຢ່າງ, ໂທລະສັບ, ແວ່ນຕາ, ຣີໂໝດ, ເຈ້ຍອະນາໄມ, ຈອກນ້ຳ)? |

| ໃຫ້ການດູແລບໍລິເວນຮູທະວານຫາໂຄນອະໄວຍະອະເພດແກ່ຄົນເຈັບຍິງ | |
|---|---|
| ຄົນເຈັບກຳລັງນອນຢູ່ໃນຕຽງ ໃນຂະນະທີ່ຈັດໃຫ້ມີການດູແລນີ້ໃຫ້. ຄົນເຈັບບໍ່ສາມາດຊ່ວຍ ຕົວເອງໃນການດູແລອັນນີ້ໄດ້. ການດູແລບໍລິເວນຮູທະວານຫາໂຄນອະໄວຍະອະເພດ ແມ່ນເຮັດໂດຍການໃຊ້ສະບູ່ ແລະນ້ຳ. ສຳລັບການທົດສອບນີ້, ຄົນເຈັບແມ່ນຫຸ່ນເພດຍິງ. | |
| ຜູ້ສະໝັກເຂົ້າສອບ: | |
| 1 | ແນະນຳຕົວເອງໃຫ້ກັບຄົນເຈັບຮູ້ຈັກບໍ ເມື່ອເລີ່ມຕົ້ນການດູແລ? |
| 2 | ໃຊ້ນ້ຳທີ່ມີອຸນນະພູມທີ່ປອດໄພ ເພື່ອທຳຄວາມສະອາດຄົນເຈັບບໍ? |
| 3 | ໃສ່ຖົງມືກ່ອນທຳຄວາມສະອາດບໍລິເວນຮູທະວານຫາໂຄນອະໄວຍະອະເພດບໍ? |
| 4 | ໃຊ້ແຜ່ນຮອງ ຫຼືຜ້າເຊັດ ເພືອປ້ອງກັນບໍ່ໃຫ້ຜ້າປູພື້ນປຽກໃນລະຫວ່າງຂັ້ນຕອນດຳ ເນີນການບໍ? |
| 5 | ໃຊ້ຜ້າເຊັດທີ່ມີສະບູ່ ເພືອອະນາໄມບໍລິເວນຮູທະວານຫາໂຄນອະໄວຍະອະເພດບໍ? |
| 6 | ໃຊ້ຜ້າເຊັດບ່ອນທີ່ສະອາດສຳລັບການເຊັດລ້າງ ແລະການໄລລ້າງຮອຍເປື້ອນແຕ່ ລະຄັ້ງບໍ? |
| 7 | ເຊັດບໍລິເວນຮູທະວານຫາໂຄນອະໄວຍະອະເພດຈາກດ້ານໜ້າໄປດ້ານຫຼັງສຳລັບທຸກການອະນາໄມ້ ແລະການໄລລ້າງຮອຍເປື້ອນທຸກຄັ້ງ? |
| 8 | ເກັບນ້ຳໃນອ່າງໄວ້ບໍ່ໃຫ້ມີສະບູ ເພື່ອໃຊ້ເປັນນ້ຳລ້າງໂດຍ: (1) ລ້າງຕີນດ້ວຍຜ້າເຊັດ ທີ່ມີການເອົາສະບູ່ໃສ່ກັບຜ້າເຊັດນັ້ນໂດຍກົງ ແທນທີ່ຈະເອົາສະບູ່ເຂົ້າໄປໃນອ່າງ ນ້ຳ; ຫຼື (2) ໃຊ້ອ່າງນ້ຳສອງອັນແຍກກັນຄື: ອັນໜຶ່ງໄວ້ສຳລັບລ້າງ ແລະອັນໜຶ່ງໄວ້ ສຳລັບໄລອອກບໍ? |
| 9 | ໄລລ້າງບໍລິເວນຮູທະວານຫາໂຄນອະໄວຍະອະເພດດ້ວຍການໃຊ້ຜ້າເຊັດຈຸ່ມນ້ຳປຽກທີ່ສະອາດບໍ່ມີສະບູ່ ຫຼືໃຊ້ຜ້າເຊັດບໍລິເວນທີ່ບໍ່ມີສະບູ່ເພື່ອທຳຄວາມສະອາດບໍ? |
| 10 | ໃຊ້ຜ້າເຊັດບໍລິເວນຮູທະວານຫາໂຄນອະໄວຍະອະເພດໃຫ້ແຫ້ງ ດ້ວຍການເຊັດ ຈາກດ້ານໜ້າໄປດ້ານຫຼັງບໍ? |
| 11 | ໃຫ້ການທຳຄວາມສະອາດ, ໄລລ້າງ ແລະເຊັດໃຫ້ແຫ້ງ ທີ່ລວມໄປຮອດແອບແອຂາ ແລະຕໍ່ໄປຫາບໍລິເວນຫົວມົນ (ບ່ອນເປັນແອບແອ) ບໍ່? |
| 12 | **ຈັດຕຳແໜ່ງຄົນເຈັບໃຫ້ຢູ່ໄລຍະຫ່າງທີ່ປອດໄພຈາກຂອບຕຽງ ເມື່ອປີ້ນດ້ານໃນລະ ຫວ່າງການດູແລບໍ?** |
| 13 | ລ້າງ, ໄລລ້າງ ແລະເຊັດບໍລິເວນຮູທະວານຫາໂຄນອະໄວຍະອະເພດ ແລະກົ້ນໃຫ້ ແຫ້ງບໍ? |
| 14 | ເຊັດຈາກດ້ານໜ້າຫາດ້ານຫຼັງບໍ ເມື່ອເຮັດການລ້າງ, ໄລລ້າງ ແລະເຊັດບໍລິເວນຮູ ທະວານຫາໂຄນອະໄວຍະອະເພດໃຫ້ແຫ້ງ? |
| 15 | ໃຫ້ຄົນເຈັບຢູ່ເທິງແຜ່ນຮອງພື້ນ ຫຼືຜ້າປູທີ່ແຫ້ງບໍ່ ໃນເວລາສຳເລັດຂັ້ນຕອນດຳເນີນ ການແລ້ວ? |
| 16 | ຫຼຸດຜ່ອນການເປີດຮ່າງກາຍຂອງຄົນເຈັບໃຫ້ໜ້ອຍທີ່ສຸດບໍ ໃນລະຫວ່າງຂັ້ນຕອນ ດຳເນີນການ? |
| 17 | ໃສ່ຖົງມືບໍ ໃນຂະນະທີ່ກຳລັງໃຫ້ການດູແລບໍລິເວນຮູທະວານຫາໂຄນອະໄວຍະອະ ເພດ, ໃນຂະນະທີ່ລ້າງ ຫຼືເຊັດອຸປະກອນໃຫ້ແຫ້ງ, ໃນເວລາຈັບຜ້າລີນິນທີ່ເປື້ອນ? |
| 18 | ລ້າງ, ເຊັດໃຫ້ແຫ້ງ ແລະເກັບອ່າງໃສ່ນ້ຳ, ກຳຈັດຜ້າລີນິນທີ່ໃຊ້ແລ້ວ ແລະຂີ້ເຫຍື້ອ ຢ່າງຖືກວິທີບໍ ໃນເວລາດຳເນີນຂັ້ນຕອນສຳເລັດ? |

| | ໃຫ້ການດູແລບໍລິເວນຮູທະວານຫາໂຄນອະໄວຍະວະເພດແກ່ຄົນເຈັບຍິງ |
|---|---|
| 19 | ເອົາຖົງມືອອກ ໂດຍທີ່ບໍ່ມີການປົນເປື້ອນໃສ່ຕົວເອງບໍ ຫຼັງຈາກທີ່ລ້າງ ແລະ ເກັບ ມ້ຽນອຸປະກອນແລ້ວ? |
| 20 | ມີການຫົ່ມຜ້າໃຫ້ຄົນເຈັບບໍ່ ໃນເວລາສຳເລັດຂັ້ນຕອນດຳເນີນການແລ້ວ? |
| 21 | ໃຊ້ມາດຕະການຄວບຄຸມການຕິດເຊື້ອ ແລະການປ້ອງກັນລ່ວງໜ້າຕາມ ມາດຕະ ຖານ ເພື່ອປົກປ້ອງຄົນເຈັບ ແລະ HCA ຕະຫຼອດຂັ້ນຕອນດຳ ເນີນການບໍ? |
| 22 | ສ້າງໃຫ້ເກີດຄວາມຕ້ອງການທາງສັງຄົມ ແລະມະນຸດຂອງຄົນເຈັບຕະຫຼອດ ຂັ້ນ ຕອນດຳເນີນການບໍ? |
| 23 | ສ້າງໃຫ້ເກີດສິດຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 24 | ສ້າງໃຫ້ເກີດຄວາມປອດໄພຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 25 | ສ້າງໃຫ້ເກີດຄວາມສະດວກສະບາຍຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນ ການບໍ? |
| 26 | ປະສິງນຳໃຊ້ທົ່ວໄປໄວ້ພາຍໃນບ່ອນທີ່ຄົນເຈັບສາມາດໄປເອົາມາໄດ້ ໃນຕອນ ທ້າຍຂອງການດູແລບໍ (ຕົວຢ່າງ, ໂທລະສັບ, ແວ່ນຕາ, ຣີໂໝດ, ເຈ້ຍອະນາໄມ, ຈອກນໍ້າ)? |

| | ໃຫ້ການດູແລທໍ່ຢ່ຽວກັບຄົນເຈັບຜູ້ທີ່ໄດ້ຕໍ່ທໍ່ຢ່ຽວເຂົ້າໄປໃນຮ່າງກາຍ |
|---|---|
| | ຄົນເຈັບກຳລັງນອນຢູ່ໃນຕຽງ ໃນຂະນະທີ່ຈັດໃຫ້ມີການດູແລນີ້ໃຫ້. ຄົນເຈັບບໍ່ ສາມາດຊ່ວຍ ຕົວເອງໃນການດູແລອັນນີ້ໄດ້. ການດູແລທໍ່ຢ່ຽວແມ່ນເຮັດໂດຍການ ໃຊ້ສະບູ່ ແລະນໍ້າ. ສຳລັບການທົດສອບນີ້, ຄົນເຈັບແມ່ນຫຸ່ນ. |
| | ຜູ້ສະໝັກເຂົ້າສອບ: |
| 1 | ແນະນຳຕົວເອງໃຫ້ກັບຄົນເຈັບຮູ້ຈັກບໍ ເມື່ອເລີ່ມຕົ້ນການດູແລ? |
| 2 | ໃຊ້ນໍ້າທີ່ມີອຸນນະພູມທີ່ປອດໄພ ເພື່ອທຳຄວາມສະອາດຄົນເຈັບບໍ? |
| 3 | ໃສ່ຖົງມືບໍກ່ອນຈັບທໍ່ຢ່ຽວ, ລະບົບທໍ່, ຖົງລະບາຍນໍ້າຢ່ຽວ ຫຼືເລີ່ມຕົ້ນການ ອະນາໄມ? |
| 4 | ໃຊ້ຜ້າເຊັດທີ່ມີສະບູ່ ເພື່ອອະນາໄມທໍ່ຢ່ຽວບໍ? |
| 5 | ປ່ຽນຈຸດຢູ່ເທິງຜ້າເຊັດສຳລັບການເຊັດລ້າງ ແລະການໄລລ້າງຮອຍເປື້ອນ ແຕ່ລະ ຄັ້ງບໍ? |
| 6 | ອະນາໄມ ແລະໄລລ້າງທໍ່ຢ່ຽວດ້ວຍການໃຊ້ຜ້າເຊັດປຽກເຊັດຈາກດ້ານໜຶ່ງ ຈາກຮູ ເປີດ (ປາຍຮູຢ່ຽວ) ແລະລົງໄປທາງລຸ່ມຈາກຮ່າງກາຍບໍ? |
| 7 | ເກັບນໍ້າໃນອ່າງໄວ້ບໍ່ໃຫ້ມີສະບູ ເພື່ອໃຊ້ເປັນນໍ້າລ້າງໂດຍ: (1) ລ້າງຕີນດ້ວຍ ຜ້າເຊັດ ທີ່ມີການເອົາສະບູ່ໃສ່ກັບຜ້າເຊັດນັ້ນໂດຍກົງ ແທນທີ່ຈະເອົາສະບູ່ ເຂົ້າໄປໃນອ່າງນໍ້າ; ຫຼື (2) ໃຊ້ອ່າງນໍ້າສອງອັນແຍກກັນຄື: ອັນໜຶ່ງໄວ້ສຳລັບ ລ້າງ ແລະອັນໜຶ່ງໄວ້ສຳລັບ ໄລອອກບໍ? |
| 8 | ລ້າງ ແລະໄລລ້າງທໍ່ຢ່ຽວຢ່າງໜ້ອຍ 4" ນີ້ວຈາກຮູເປີດ (ປາຍຮູຢ່ຽວ) ລົງລຸ່ມ ບໍ |
| 9 | ໄລລ້າງບໍລິເວນທໍ່ຢ່ຽວທີ່ສະອາດດ້ວຍການໃຊ້ຜ້າເຊັດຈຸ່ມນໍ້າປຽກທີ່ສະອາດບໍ່ ມີສະບູ່ ຫຼືໃຊ້ຜ້າເຊັດບໍລິເວນທີ່ບໍ່ມີສະບູ່ເພື່ອທຳຄວາມສະອາດບໍ? |
| 10 | ຖືທໍ່ຢ່ຽວຢູ່ໃກ້ຮູເປີດ (ປາຍຮູຢ່ຽວ) ເພື່ອປ້ອງກັນການດຶງ ເມື່ອລ້າງ ຫຼືໄລ ລ້າງທໍ່ ຢ່ຽວບໍ? |
| 11 | ປ່ອຍໃຫ້ບໍລິເວນຜິວໜັງທີ່ປຽກໃນລະຫວ່າງການດູແລ ແລະຜ້າປູຕຽງແຫ້ງ ບໍ ໃນເວ ລາສຳເລັດຂັ້ນຕອນດຳເນີນການແລ້ວ? |
| 12 | ເຊັດບໍລິເວນຜິວໜັງຄ່ອຍໆໃຫ້ແຫ້ງບໍ? |
| 13 | ປ່ອຍໃຫ້ລະບົບທໍ່ຢ່ຽວຢຽດຊື່ບໍ ໃນເວລາສຳເລັດຂັ້ນຕອນດຳເນີນການ ແລ້ວ? |
| 14 | ຮັກສາຖົງລະບາຍນໍ້າຢ່ຽວໄວ້ຕໍ່າກວ່າພົກຢ່ຽວຕະຫຼອດເວລາການດູແລ ແລະ ໃນ ຕອນທ້າຍຂອງຂັ້ນຕອນດຳເນີນການບໍ? |
| 15 | ຫຼຸດຜ່ອນການເປີດຮ່າງກາຍຂອງຄົນເຈັບໃຫ້ໜ້ອຍທີ່ສຸດບໍ ໃນລະຫວ່າງຂັ້ນ ຕອນ ດຳເນີນການ? |
| 16 | **ຈັດຕຳແໜ່ງຄົນເຈັບໃຫ້ຢູ່ໄລຍະຫ່າງທີ່ປອດໄພຈາກຂອບຕຽງ ຖ້າປິ່ນດ້ານ ໃນ ລະຫວ່າງການດູແລບໍ?** |
| 17 | ໃສ່ຖົງມືບໍ ໃນຂະນະທີ່ກຳລັງໃຫ້ການດູແລທໍ່ຢ່ຽວ, ໃນຂະນະທີ່ລ້າງ ຫຼືເຊັດ ອຸປະ ກອນໃຫ້ແຫ້ງ, ໃນເວລາຈັບຜ້າລິນິນທີ່ເປື້ອນ? |
| 18 | ລ້າງ, ເຊັດໃຫ້ແຫ້ງ ແລະເກັບອ່າງໃສ່ນໍ້າ, ກຳຈັດຜ້າລິນິນທີ່ໃຊ້ແລ້ວ ແລະຂີ້ ເຫຍື້ອ ຢ່າງຖືກວິທີບໍ ໃນເວລາດຳເນີນຂັ້ນຕອນສຳເລັດ? |

| | ໃຫ້ການດູແລບໍລິເວນຮູທະວານຫາໂຄນອະໄວຍະວະເພດແກ່ຄົນເຈັບຍິງ |
|---|---|
| 19 | ເອົາຖົງມືອອກ ໂດຍທີ່ບໍ່ມີການປົນເປື້ອນໃສ່ຕົວເອງບໍ ຫຼັງຈາກທີ່ລ້າງ ແລະ ເກັບມ້ຽນ ອຸປະກອນແລ້ວ? |
| 20 | ມີການຫົ່ມຜ້າໃຫ້ຄົນເຈັບບໍ່ ໃນເວລາສຳເລັດຂັ້ນຕອນດຳເນີນການແລ້ວ? |
| 21 | ໃຊ້ມາດຕະການຄວບຄຸມການຕິດເຊື້ອ ແລະການປ້ອງກັນລ່ວງໜ້າຕາມ ມາດ ຕະຖານ ເພື່ອປົກປ້ອງຄົນເຈັບ ແລະ HCA ຕະຫຼອດຂັ້ນຕອນດຳເນີນ ການບໍ? |
| 22 | ສ້າງໃຫ້ເກີດຄວາມຕ້ອງການທາງສັງຄົມ ແລະມະນຸດຂອງຄົນເຈັບຕະຫຼອດ ຂັ້ນ ຕອນດຳເນີນການບໍ? |
| 23 | ສ້າງໃຫ້ເກີດສິດຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 24 | ສ້າງໃຫ້ເກີດຄວາມປອດໄພຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນການບໍ? |
| 25 | ສ້າງໃຫ້ເກີດຄວາມສະດວກສະບາຍຂອງຄົນເຈັບຕະຫຼອດຂັ້ນຕອນດຳເນີນ ການບໍ? |
| 26 | ປະສິງນຳໃຊ້ທົ່ວໄປໄວ້ພາຍໃນບ່ອນທີ່ຄົນເຈັບສາມາດໄປເອົາມາໄດ້ ໃນຕອນ ທ້າຍ ຂອງການດູແລບໍ (ຕົວຢ່າງ, ໂທລະສັບ, ແວ່ນຕາ, ຣີໂໝດ, ເຈ້ຍອະນາໄມ, ຈອກນໍ້າ)? |

| | ການຍ້າຍຄົນເຈັບອອກຈາກຕຽງລົງມາໃສ່ລົດເຂັນ |
|---|---|
| | ຄົນເຈັບກຳລັງນອນຢູ່ໃນຕຽງ ເມື່ອການດູແລນີ້ເລີ່ມຕົ້ນສຳລັບທັກສະນີ້. ຄົນເຈັບ ສາມາດຮັບ ນໍ້າໜັກໄດ້, ແຕ່ບໍ່ສາມາດຍ່າງໄດ້. ການຍ້າຍຄົນເຈັບແມ່ນຈຳເປັນຕ້ອງ ມີສາຍຮັດ (ສາຍ ຊ່ວຍຍົກ) ໃນການຍ້າຍ. ບົດບາດຂອງຄົນເຈັບແມ່ນຜູ້ສະໝັກເຂົ້າ ສອບຄົນອື່ນເປັນຄົນເຮັດ. |
| | ຜູ້ສະໝັກເຂົ້າສອບ: |
| 1 | ແນະນຳຕົວເອງໃຫ້ກັບຄົນເຈັບຮູ້ຈັກບໍ ເມື່ອເລີ່ມຕົ້ນການດູແລ? |
| 2 | ຈັດຕຳແໜ່ງລົດເຂັນໄວ້ໃກ້ກັບຕຽງກ່ອນຊ່ວຍໃຫ້ຄົນເຈັບນັ່ງລົງບໍ? |
| 3 | ຊ່ວຍຄົນເຈັບໃຊ້ເກີບຮອງທີ່ບໍ່ມື່ນກ່ອນຢືນຂຶ້ນບໍ? |
| 4 | ໃຫ້ການຄໍ້າຍັນໂດຍການຈັບດ້ານຫຼັງບ່າໄຫຼ່ ຫຼືຫຼັງຂອງຄົນເຈັບ, ແລະສະ ໂພກບໍ ເພື່ອຊ່ວຍໃຫ້ຄົນເຈັບລຸກນັ່ງຢູ່ຂອບຕຽງໄດ້? |
| 5 | ໃຊ້ສາຍຮັດ (ສາຍຊ່ວຍຍົກ) ການຍ້າຍ ກ່ອນທີ່ຈະເອົາຄົນເຈັບຢືນຂຶ້ນ ເພື່ອ ຍ້າຍໄປ ໃສ່ລໍ້ເຂັນບໍ? |
| 6 | ໃຊ້ສາຍຮັດ (ສາຍຊ່ວຍຍົກ) ການຍ້າຍຢູ່ເທິງເຄື່ອງນຸ່ງທີ່ພໍດີ ທີ່ເຮັດໃຫ້ສອດ ມືເຂົ້າ ໄປລະຫວ່າງສາຍຮັດ ແລະຮ່າງກາຍຂອງຄົນເຈັບໄດ້ພໍດີບໍ? |
| 7 | ວາງຕຳແໜ່ງລໍ້ເຂັນ ເພື່ອເຮັດໃຫ້ແກນໝູນກັບລໍ້ໃນດ້ານໜ້າ ທີ່ເຮັດໃຫ້ ບ່ອນນັ່ງຂະ ໜານ ຫຼືເປັນມຸມເລັກນ້ອຍບໍ, ກ່ອນເລີ່ມການຍ້າຍມາໃສ່? |
| 8 | ໃຫ້ຕີນຂອງຄົນເຈັບ (ທີ່ໃສ່ເກີບຢູ່) ຢຽບຢູ່ໃນຕຳແໜ່ງພຽງເທິງພື້ນ ກ່ອນ ຢືນຂຶ້ນບໍ? |
| 9 | ມີການຮັບປະກັນໃຫ້ບ່ອນພັກຕີນຍົກຂຶ້ນ, ເອົາອອກໄປ ຫຼືປິ່ນອອກໄປຈາກ ທາງບໍ ກ່ອນຍ້າຍຄົນເຈັບໄປໃສ່ລົດເຂັນ? |
| 10 | **ລັອກລໍ້ກ່ອນເລີ່ມການຍ້າຍໄປໃສ່ບໍ?** |
| 11 | ຈ່ອງສ່ວນປາຍຂາດ້ານໜຶ່ງ ຫຼືທັງສອງດ້ານຂອງຄົນເຈັບໄວ້ບໍ ໃນຂະນະທີ່ກຳ ລັງ ຊ່ວຍໃຫ້ຢືນຂຶ້ນ? |
| 12 | ຄ້ວາຈັບສາຍຮັດຢູ່ດ້ານຕ່າງໆ ຫຼືອ້ອມດ້ານຫຼັງບໍ ເມື່ອຊ່ວຍເອົາຄົນເຈັບຢືນ ຂຶ້ນ ແລະໃນຕະຫຼອດການຍ້າຍ? |
| 13 | ໃຫ້ສັນຍານບອກຄົນເຈັບໃຫ້ຢືນຂຶ້ນບໍ? |
| 14 | ປິ່ນຄົນເຈັບເມື່ອຢືນຂຶ້ນບໍ ເພື່ອວ່າດ້ານຫຼັງຂອງຂາຖືກຈັດໄວ້ຢູ່ຕຳແໜ່ງ ໃຈກາງຕໍ່ ໜ້າກັບບ່ອນນັ່ງຂອງລໍ້ເຂັນ? |
| 15 | ໃຫ້ສັນຍານຄົນເຈັບໃຫ້ຈັບບ່ອນວາງແຂນ ກ່ອນນັ່ງລົງໃນລົດເຂັນບໍ? |
| 16 | ໃຫ້ການຫຍໍ້ຕົວລົງເບົາໆທີ່ມີການຄວບຄຸມລົງໃນບ່ອນນັ່ງລົດເຂັນບໍ? |
| 17 | ສຳເລັດການຍ້າຍລົງດ້ວຍການໃຫ້ສະໂພກຂອງຄົນເຈັບຢູ່ໃນຕຳແໜ່ງລົງ ດ້ານຫຼັງຂອງບ່ອນນັ່ງລົດເຂັນບໍ? |
| 18 | ປ່ອຍໃຫ້ຄົນເຈັບນັ່ງຢູ່ໃນລົດເຂັນໃນການຈັດທ່າຮ່າງກາຍທີ່ຖືກຕ້ອງ ແລະມີ ການ ຈັດຕຳແໜ່ງໃຫ້ຕີນໄປຢູ່ໃນບ່ອນວາງຕີນບໍ? |
| 19 | ເອົາສາຍຮັດຊ່ວຍອອກບໍ ຫຼັງຈາກຍ້າຍລົງສຳເລັດແລ້ວ? |

| ການຍ້າຍຄົນເຈັບອອກຈາກຕຽງລົງມາໃສ່ລົດເຂັນ | |
|---|---|
| 20 | ໃຊ້ມາດຕະການຄວບຄຸມການຕິດເຊື້ອ ແລະການປ້ອງກັນລ່ວງໜ້າຕາມມາດ ຕະຖານ ເພື່ອປົກປ້ອງຄົນເຈັບ ແລະ HCA ຕະຫຼອດຂັ້ນຕອນດໍາເນີນການບໍ? |
| 21 | ສ້າງໃຫ້ເກີດຄວາມຕ້ອງການທາງສັງຄົມ ແລະມະນຸດຂອງຄົນເຈັບຕະຫຼອດຂັ້ນ ຕອນດໍາເນີນການບໍ? |
| 22 | ສ້າງໃຫ້ເກີດສິດຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 23 | ສ້າງໃຫ້ເກີດຄວາມປອດໄພຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 24 | ສ້າງໃຫ້ເກີດຄວາມສະດວກສະບາຍຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 25 | ປະສິງນໍາໃຊ້ທົ່ວໄປໄວ້ພາຍໃນບ່ອນທີ່ຄົນເຈັບສາມາດໄປເອົາມາໄດ້ ໃນຕອນທ້າຍຂອງການດູແລບໍ (ຕົວຢ່າງ, ໂທລະສັບ, ແວ່ນຕາ, ຣີໂໝດ, ເຈ້ຍອະນາໄມ, ຈອກນໍ້າ)? |

| ປີ້ນ ແລະຈັດທ່າໃໝ່ໃຫ້ກັບຄົນເຈັບຜູ້ທີ່ຕ້ອງນອນຢູ່ເທິງຕຽງ, ຢູ່ແຕ່ໃນດ້ານຂອງລາວ/ນາງ | |
|---|---|
| ຄົນເຈັບກໍາລັງນອນຫງາຍຢູ່ໃນຕຽງຂອງລາວ/ນາງ ເມື່ອການດູແລນີ້ເລີ່ມຕົ້ນສໍາລັບທັກສະນີ້. ຄົນເຈັບຕ້ອງການຄວາມຊ່ວຍເຫຼືອ ເພື່ອປີ້ນ ແລະຄໍ້າຍັນໃຫ້ນອນຢູ່ດ້ານຂ້າງໄດ້. ບົດບາດ ຂອງຄົນເຈັບແມ່ນຜູ້ສະໝັກເຂົ້າສອບຄົນອື່ນເປັນຄົນເຮັດ. | |
| ຜູ້ສະໝັກເຂົ້າສອບ: | |
| 1 | ແນະນໍາຕົວເອງໃຫ້ກັບຄົນເຈັບຮູ້ຈັກບໍ ເມື່ອເລີ່ມຕົ້ນການດູແລ? |
| 2 | ຈັບຄົນເຈັບບໍລິເວນສະໂພກ ແລະບ່າໄຫຼ່ບໍ ເມື່ອປີ້ນດ້ານ? |
| 3 | **ຈັດຕໍາແໜ່ງຄົນເຈັບໃຫ້ຢູ່ໄລຍະຫ່າງທີ່ປອດໄພຈາກຂອບຕຽງບໍ ເມື່ອປີ້ນດ້ານ?** |
| 4 | ວາງຕໍາແໜ່ງເຄື່ອງ (ເຊັ່ນ: ເຄື່ອງຮອງ, ໝອນ) ພັບຮອງລົງດ້ານຫຼັງ ແລະຍັດເຂົ້າບໍ ເພື່ອເຮັດໃຫ້ຕໍາແໜ່ງການນອນແຕງດ້ານຂ້າງຂອງຄົນເຈັບຢູ່ໄດ້? |
| 5 | ປ່ອຍໃຫ້ຄົນເຈັບນອນແຕງຢູ່ບໍ, ເພື່ອຫຼີກເວັ້ນແຮງດັນຕໍ່ກັບກະດູກສະໂພກໂດຍກົງ? |

| ປີ້ນ ແລະຈັດທ່າໃໝ່ໃຫ້ກັບຄົນເຈັບຜູ້ທີ່ຕ້ອງນອນຢູ່ເທິງຕຽງ, ຢູ່ແຕ່ໃນດ້ານຂອງລາວ/ນາງ | |
|---|---|
| 6 | ໃຊ້ເຄື່ອງ (ເຊັ່ນ: ເຄື່ອງຮອງ, ໝອນ) ເພື່ອຄໍ້າຍັນຂາສ່ວນເທິງບໍ? |
| 7 | ໃຊ້ເຄື່ອງ (ເຊັ່ນ: ເຄື່ອງຮອງ, ໝອນ) ເພື່ອຮັກສາລະດັບສະໂພກສ່ວນເທິງບໍ? |
| 8 | ປ່ອຍໃຫ້ຫົວເຂົ່າທັບຢູ່ບໍ? |
| 9 | ປ່ອຍໃຫ້ຂໍ້ຕີນ ແລະຫົວເຂົ່າແຍກກັນບໍ? |
| 10 | ປ່ອຍໃຫ້ຄົນເຈັບນອນແຕງຢູ່ໂດຍມີໝອນໜູນຫົວຢູ່ບໍ? |
| 11 | ປ່ອຍໃຫ້ແຂນສ່ວນລຸ່ມ ແລະບ່າໄຫຼ່ຂອງຄົນເຈັບບໍ່ຖືກພັບເຂົ້າຢູ່ລຸ່ມດ້ານຂ້າງບໍ? |
| 12 | ຄໍ້າແຂນສ່ວນເທິງ ໂດຍການໃຊ້ເຄື່ອງຮອງ ຫຼືໝອນບໍ? |
| 13 | ມີການຫົ່ມຜ້າໃຫ້ຄົນເຈັບບໍ່ ໃນເວລາສໍາເລັດຂັ້ນຕອນດໍາເນີນການແລ້ວ? |
| 14 | ໃຊ້ມາດຕະການຄວບຄຸມການຕິດເຊື້ອ ແລະການປ້ອງກັນລ່ວງໜ້າຕາມມາດ ຕະຖານ ເພື່ອປົກປ້ອງຄົນເຈັບ ແລະ HCA ຕະຫຼອດຂັ້ນຕອນດໍາເນີນການບໍ? |
| 15 | ສ້າງໃຫ້ເກີດຄວາມຕ້ອງການທາງສັງຄົມ ແລະມະນຸດຂອງຄົນເຈັບຕະຫຼອດຂັ້ນ ຕອນດໍາເນີນການບໍ? |
| 16 | ສ້າງໃຫ້ເກີດສິດຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 17 | ສ້າງໃຫ້ເກີດຄວາມປອດໄພຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 18 | ສ້າງໃຫ້ເກີດຄວາມສະດວກສະບາຍຂອງຄົນເຈັບຕະຫຼອດຂັ້ນຕອນດໍາເນີນການບໍ? |
| 19 | ປະສິງນໍາໃຊ້ທົ່ວໄປໄວ້ພາຍໃນບ່ອນທີ່ຄົນເຈັບສາມາດໄປເອົາມາໄດ້ ໃນຕອນທ້າຍ ຂອງການດູແລບໍ (ຕົວຢ່າງ, ໂທລະສັບ, ແວ່ນຕາ, ຣີໂໝດ, ເຈ້ຍອະນາໄມ, ຈອກນໍ້າ)? |